ສາລະບານ

ກົດໝາຍ ວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ......................................4
ພາກທີ I ບົດບັນຍັດທົ່ວໄປ ......................................................................................4
ມາດຕາ 1. ຈຸດປະສົງ ........................................................................................4
ມາດຕາ 2. ການຕິດຕາມກວດກາຂອງສະພາແຫ່ງຊາດ ......................................4
ມາດຕາ 3. ຄວາມໝາຍສຳຄັນຂອງການຕິດຕາມກວດກາ ..................................4
ມາດຕາ 4. ພາລະບົດບາດຕິດຕາມກວດກາຂອງສະພາແຫ່ງຊາດ..........................5
ມາດຕາ 5. ປະເພດການຕິດຕາມກວດກາຂອງສະພາແຫ່ງຊາດ...........................5
ມາດຕາ 6. ຄວາມຮັບຜິດຊອບໃນການຕິດຕາມກວດກາຂອງສະພາແຫ່ງຊາດ .........5
ມາດຕາ 7. ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ ................................6
ມາດຕາ 8. ການເຂົ້າຮ່ວມໃນການຕິດຕາມກວດກາຂອງສະພາແຫ່ງຊາດ ...............7
ມາດຕາ 9. ການແກ້ໄຂຜົນຂອງການຕິດຕາມກວດກາ.........................................7
ພາກທີ II ການຕິດຕາມກວດກາຂອງສະພາແຫ່ງຊາດ .............................................8
ໝວດທີ I ການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ...........................8
ມາດຕາ 10. ເນື້ອໃນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ...........8
ມາດຕາ 11. ການສ້າງແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ..8
ມາດຕາ 12. ການພິຈາລະນາບົດລາຍງານຂອງພາກສ່ວນຕ່າງໆ ..........................9
ມາດຕາ 13. ການຕິດຕາມກວດການິຕິກຳຕ່າງໆ.............................................10
ມາດຕາ 14. ການຊັກຖາມ ແລະການຕອບຄຳຊັກຖາມ ....................................10
ມາດຕາ 15. ການຕິດຕາມກວດກາ ກ່ຽວກັບການແກ້ໄຂຄຳສະເໜີ
ແລະຄຳຮ້ອງທຸກຂອງ ປະຊາຊົນ ...................................................................11
ມາດຕາ 16. ການແຕ່ງຕັ້ງຄະນະກຳມະການຊົ່ວຄາວຂອງສະພາແຫ່ງຊາດ ..........11
ມາດຕາ 17. ການພິຈາລະນາຜົນຂອງການຕິດຕາມກວດກາ ..........................12
ມາດດຕາ 18. ການລົງຄະແນນສຽງ ກ່ຽວກັບການປົດຕຳແໜ່ງ ຫລືບໍ່ໄວ້ວາງໃຈ ...12
ໝວດທີ II ການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ.......................13
ມາດຕາ 19. ເນື້ອໃນຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ .............13
ມາດຕາ 20. ການສ້າງແຜນການຕິດຕາມກວດກາ...........................................14
ມາດຕາ 21. ການພິຈາລະນາການລາຍງານ ...................................................14
ມາດຕາ 22. ການຕິດຕາມກວດການິຕິກຳ.....................................................15
ມາດຕາ 23. ການຕິດຕາມກວດກາການເລືອກຕັ້ງສະມາຊິກສະພາແຫ່ງຊາດ.........15
ມາດຕາ 24. ການຕິດຕາມກວດກາ ກ່ຽວກັບການແກ້ໄຂຄຳສະເໜີ
ແລະຄຳຮ້ອງທຸກຂອງ ປະຊາ ຊົນ ..................................................................16
ມາດຕາ 25. ການແຕ່ງຕັ້ງຄະນະສະເພາະກິດ..................................................16
ມາດຕາ 26. ການພິຈາລະນາການລາຍງານຂອງຄະນະສະເພາະກິດ................17

ມາດຕາ 27. ການພິຈາລະນາ, ແກ້ໄຂຜົນຂອງການຕິດຕາມກວດກາ..................18
ໝວດທີ III ການຕິດຕາມກວດກາຂອງກຳມາທິການ ຂອງສະພາແຫ່ງຊາດ............18
ມາດຕາ 28. ເນື້ອໃນຕິດຕາມກວດກາຂອງກຳມາທິການ ..................................18
ມາດຕາ 29. ການສ້າງແຜນການຕິດຕາມກວດກາຂອງກຳມາທິການ ..................19
ມາດຕາ 31. ການຕິດຕາມກວດການິຕິກຳຕ່າງໆ............................................20
ມາດຕາ 32. ການແຕ່ງຕັ້ງໜ່ວຍງານສະເພາະກິດ ..........................................21
ມາດຕາ 33. ການພິຈາລະນາ ແລະແກ້ໄຂຜົນຂອງການຕິດຕາມກວດກາ ............21
ໝວດທີ IV ການຕິດຕາມກວດກາ ຂອງຄະນະສະມາຊິກສະພາແຫ່ງຊາດ
ຢູ່ເຂດເລືອກຕັ້ງ 22
ມາດຕາ 34. ເນື້ອໃນການຕິດຕາມກວດກາ .....................................................22
ມາດຕາ 35. ການສ້າງແຜນການຕິດຕາມກວດກາ..........................................23
ມາດຕາ 37. ການຕິດຕາມກວດການິຕິກຳຕ່າງໆ............................................24
ມາດຕາ 38. ການຕິດຕາມກວດກາການແກ້ໄຂຄຳສະເໜີ
ແລະຄຳຮ້ອງທຸກຂອງປະຊາຊົນ ...................................................................24
ມາດຕາ 39. ການແຕ່ງຕັ້ງໜ່ວຍງານສະເພາະກິດ ..........................................25
ມາດຕາ 40. ການພິຈາລະນາ ແລະແກ້ໄຂຜົນຂອງການຕິດຕາມກວດກາ...........25
ໝວດທີ V ການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ...........................26
ມາດຕາ 41. ເນື້ອໃນການຕິດຕາມກວດກາ ..................................................26
ມາດຕາ 42. ການສ້າງ ແລະປະຕິບັດແຜນການຕິດຕາມກວດກາ.......................27
ມາດຕາ 43. ການເຄື່ອນໄຫວຕິດຕາມກວດກາ..............................................27
ມາດຕາ 44. ການຊັກຖາມຢູ່ໃນກອງປະຊຸມສະພາແຫ່ງຊາດ ...........................27
ມາດຕາ 45. ການຕິດຕາມກວດການິຕິກຳຕ່າງໆ............................................28
ມາດຕາ 46. ການຕິດຕາມກວດກາການແກ້ໄຂຄຳສະເໜີ
ແລະຄຳຮ້ອງທຸກຂອງປະຊາຊົນ ...................................................................28
ມາດຕາ 47. ການລາຍງານຜົນຂອງການຕິດຕາມກວດກາ ...............................28
ມາດຕາ 48. ການກວດກາຂອງປະຊາຊົນ .....................................................28
ໝວດທີ VI ການອຳນວຍຄວາມສະດວກໃຫ້ແກ່ວຽກງານຕິດຕາມກວດກາ
ຂອງສະພາແຫ່ງຊາດ .....................................................................................28
ມາດຕາ 49. ຫ້ອງວ່າການສະພາແຫ່ງຊາດ
ແລະຫ້ອງການສະພາແຫ່ງຊາດປະຈຳເຂດເລືອກ ຕັ້ງ ..........................................29
ມາດຕາ 50. ອົງການຈັດຕັ້ງ ແລະພົນລະເມືອງ..............................................29
ພາກທີ III ພັນທະ, ຄວາມຮັບຜິດຊອບ ແລະສິດ ຂອງການຈັດຕັ້ງ
ແລະບຸກຄົນທີ່ຖືກຕິດຕາມກວດກາ .....................................................................29
ມາດຕາ 51. ພັນທະ ແລະຄວາມຮັບຜິດຊອບ ................................................29

ມາດຕາ 52. ສິດຂອງການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ ..................30
ພາກທີ IV ບົດບັນຍັດສຸດທ້າຍ ..........................................................................30
ມາດຕາ 53. ການຈັດຕັ້ງປະຕິບັດ .................................................................30
ມາດຕາ 54. ຜົນສັກສິດ ...............................................................................30

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ ເລກທີ 09/ ສພຊ
ນະຄອນຫຼວງວຽງຈັນ, ວັນທີ 22 ຕຸລາ 2004

# ກົດໝາຍ ວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ

## ພາກທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ກຳນົດຫຼັກການ, ລະບຽບການ, ວິທີການ ແລະມາດຕະການ ກ່ຽວກັບການຕິດຕາມກວດກາ ຂອງສະພາແຫ່ງຊາດ ຕໍ່ການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ ເພື່ອເຮັດໃຫ້ລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ໄດ້ຮັບການຈັດຕັ້ງປະຕິ ບັດຢ່າງເຂັ້ມງວດ, ໂປ່ງໃສ ແລະເປັນເອກະພາບໃນທົ່ວປະເທດ, ຮັບປະກັນເຮັດໃຫ້ລະບົບ ການເມືອງ ມີສະຖຽນລະພາບ, ປະເທດຊາດມີຄວາມສະຫງົບ, ເສດຖະກິດ-ວັດທະນະທຳມີ ການຂະຫຍາຍຕົວ, ສັງຄົມມີຄວາມສີວິໄລ ແລະຍຸຕິທຳ.

### ມາດຕາ 2. ການຕິດຕາມກວດກາຂອງສະພາແຫ່ງຊາດ

ການຕິດຕາມກວດກາຂອງສະພາແຫ່ງຊາດ ແມ່ນການຕິດຕາມ, ການພິຈາລະນາ, ການຕີລາຄາ ການເຄື່ອນໄຫວຂອງການຈັດຕັ້ງ ແລະບຸກຄົນທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງ ກົດໝາຍສະບັບນີ້ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງ ກອງປະຊຸມສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ແລະມີວິທີການ, ມາດຕະການແກ້ໄຂບັນຫາທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ.

### ມາດຕາ 3. ຄວາມໝາຍສຳຄັນຂອງການຕິດຕາມກວດກາ

ການຕິດຕາມກວດກາຂອງສະພາແຫ່ງຊາດມີຄວາມສຳຄັນ ແລະຈຳເປັນພາວະວິໃສ ໃນການສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ເຂົ້າຮ່ວມໃນການກວດກາ, ຄຸ້ມຄອງລັດ, ຄຸ້ມຄອງເສດ ຖະກິດ-ສັງຄົມ ເພື່ອໃຫ້ອຳນາດລັດ, ລັດຖະທຳມະນູນ, ກົດໝາຍມີຄວາມສັກສິດ, ສະກັດກັ້ນການລະເມີດລະບຽບກົດໝາຍ, ແກ້ໄຂປາກົດການຫຍໍ້ທໍ້ໃນສັງຄົມ ເຊັ່ນ: ພະຍາດອາດຍາສິດ, ສໍ້ລາດບັງຫລວງ, ສວຍໃຊ້ອຳນາດ, ໜ້າທີ່ຕຳແໜ່ງ, ເມີນເສີຍຕໍ່ໜ້າທີ່; ເຮັດໃຫ້ການຈັດຕັ້ງ ແລະບຸກຄົນ ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງຕົນ.

## ມາດຕາ 4. ພາລະບົດບາດຕິດຕາມກວດກາຂອງສະພາແຫ່ງຊາດ

ສະພາແຫ່ງຊາດ ປະຕິບັດພາລະບົດບາດຕິດຕາມກວດກາສູງສຸດຂອງຕົນ ຢູ່ໃນກອງ ປະຊຸມສະພາແຫ່ງຊາດ ບົນພື້ນຖານການເຄື່ອນໄຫວຕິດຕາມກວດກາ ຂອງຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ແລະ ຂອງສະມາຊິກສະພາແຫ່ງຊາດ.

## ມາດຕາ 5. ປະເພດການຕິດຕາມກວດກາຂອງສະພາແຫ່ງຊາດ

ສະພາແຫ່ງຊາດຕິດຕາມກວດກາຕາມປະເພດຕົ້ນຕໍດັ່ງນີ້ :

- ຕິດຕາມກວດກາທົ່ວໄປ;
- ຕິດຕາມກວດກາການອອກນິຕິກຳ;
- ຕິດຕາມກວດກາການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ;
- ຕິດຕາມກວດກາສະເພາະບັນຫາໃດໜຶ່ງ, ການຈັດຕັ້ງ, ບຸກຄົນ, ຂົງເຂດ ຫລືບໍລິ ເວນໃດໜຶ່ງທີ່ມີປາກົດການລະເມີດລະບຽບກົດໝາຍ.

## ມາດຕາ 6. ຄວາມຮັບຜິດຊອບໃນການຕິດຕາມກວດກາຂອງສະພາແຫ່ງຊາດ

ການຕິດຕາມກວດກາຂອງສະພາແຫ່ງຊາດ ຕ້ອງດຳເນີນຢ່າງເປີດເຜີຍ, ພາວະວິໄສ, ຖືກຕ້ອງກັບຄວາມເປັນຈິງ, ຕາມຂອບເຂດສິດອຳນາດຂອງຕົນ ແລະຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນກົດໝາຍ. ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ, ຄະນະ ສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາແຫ່ງຊາດ ຕ້ອງຮັບຜິດຊອບຕໍ່ການເຄື່ອນ ໄຫວຕິດຕາມກວດກາຂອງຕົນ.

ກອງປະຊຸມສະພາແຫ່ງຊາດ ມີຄວາມຮັບຜິດຊອບ ແລະລາຍງານການເຄື່ອນໄຫວ ວຽກງານຕິດຕາມກວດກາຂອງຕົນ ຕໍ່ຜູ້ມີສິດເລືອກຕັ້ງໃນທົ່ວປະເທດ.

ຄະນະປະຈຳສະພາແຫ່ງຊາດ ມີຄວາມຮັບຜິດຊອບ ແລະລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ກອງປະຊຸມສະພາແຫ່ງຊາດ.

ກຳມາທິການຂອງສະພາແຫ່ງຊາດ ແລະຄະນະສະມາຊິກສະພາແຫ່ງຊາດ ມີຄວາມຮັບຜິດຊອບ ແລະລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ຄະນະປະຈຳສະພາແຫ່ງຊາດ.

ສະມາຊິກສະພາແຫ່ງຊາດ ມີຄວາມຮັບຜິດຊອບ ແລະລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາຂອງຕົນ ຕໍ່ຄະນະສະມາຊິກສະພາແຫ່ງຊາດ, ກຳມາທິການທີ່ຕົນສັງກັດ, ຄະນະປະຈຳສະພາແຫ່ງຊາດ ແລະຜູ້ມີສິດເລືອກຕັ້ງຢູ່ໃນທ້ອງຖິ່ນຂອງຕົນ.

## ມາດຕາ 7. ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ

1. ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ ໂດຍກອງປະຊຸມສະພາແຫ່ງຊາດ:

- ປະທານປະເທດ;
- ປະທານສະພາແຫ່ງຊາດ;
- ຄະນະປະຈຳສະພາແຫ່ງຊາດ;
- ລັດຖະບານ;
- ນາຍົກລັດຖະມົນຕີ;
- ລັດຖະມົນຕີ ແລະຫົວໜ້າອົງການທຽບເທົ່າກະຊວງ;
- ປະທານສານປະຊາຊົນສູງສຸດ;
- ໄອຍະການປະຊາຊົນສູງສຸດ.

2. ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ ໂດຍຄະນະປະຈຳສະພາແຫ່ງຊາດ:

- ລັດຖະບານ;
- ນາຍົກລັດຖະມົນຕີ;
- ລັດຖະມົນຕີ ແລະຫົວໜ້າອົງການທຽບເທົ່າກະຊວງ;
- ປະທານສານປະຊາຊົນສູງສຸດ;
- ໄອຍະການປະຊາຊົນສູງສຸດ;
- ເຈົ້າແຂວງ, ເຈົ້າຄອງນະຄອນ ແລະຫົວໜ້າເຂດພິເສດ.

3. ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາໂດຍກຳມາທິການຂອງສະພາແຫ່ງ ຊາດ:

- ລັດຖະມົນຕີ ແລະຫົວໜ້າອົງການທຽບເທົ່າກະຊວງ;
- ປະທານສານປະຊາຊົນຂັ້ນອຸທອນ, ປະທານສານທະຫານຂັ້ນ ສູງ ແລະ ປະທານສານທະຫານພາກ;
- ໄອຍະການປະຊາຊົນຂັ້ນອຸທອນ, ໄອຍະການທະຫານຂັ້ນສູງ ແລະ ໄອຍະການທະຫານພາກ.

4. ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາໂດຍຄະນະສະມາຊິກສະພາແຫ່ງ ຊາດ:

- ອົງການປົກຄອງຂັ້ນແຂວງ;
- ຫົວໜ້າພະແນກການຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ນາຍບ້ານ;
- ປະທານສານປະຊາຊົນຂັ້ນແຂວງ, ປະທານສານປະຊາຊົນຂັ້ນເມືອງ;
- ໄອຍະການປະຊາຊົນຂັ້ນແຂວງ, ໄອຍະການປະຊາຊົນຂັ້ນເມືອງ.

5. ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາໂດຍສະມາຊິກສະພາແຫ່ງຊາດ:

- ການຕັ້ງຄໍາຖາມ ແລະຄໍາຊັກຖາມໃນກອງປະຊຸມສະພາແຫ່ງຊາດ:
  + ຕັ້ງຄໍາຖາມຕໍ່ປະທານປະເທດ;
  + ຕັ້ງຄໍາຖາມຕໍ່ປະທານສະພາແຫ່ງຊາດ;
  + ຊັກຖາມນາຍົກລັດຖະມົນຕີ;
  + ຊັກຖາມລັດຖະມົນຕີ ແລະ ຫົວໜ້າອົງການທຽບເທົ່າກະຊວງ;
  + ຊັກຖາມປະທານສານປະຊາຊົນສູງສຸດ;
  + ຊັກຖາມໄອຍະການປະຊາຊົນສູງສຸດ.
- ຜູ້ທີ່ໄດ້ກໍານົດໄວ້ໃນຂໍ້ 4 ຂອງມາດຕານີ້.

ນອກຈາກການຈັດຕັ້ງ ແລະບຸກຄົນ ທີ່ໄດ້ກໍານົດໄວ້ໃນມາດຕານີ້ແລ້ວ ຖ້າມີຄວາມຈໍາ ເປັນກໍສາມາດຕິດຕາມກວດກາການຈັດຕັ້ງ ແລະບຸກຄົນອື່ນໄດ້ອີກ.

## ມາດຕາ 8. ການເຂົ້າຮ່ວມໃນການຕິດຕາມກວດກາຂອງສະພາແຫ່ງຊາດ

ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ປະຊາຊົນມີສິດ ແລະພັນທະເຂົ້າຮ່ວມໃນການຕິດຕາມກວດກາ ຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາແຫ່ງຊາດ.

ເພື່ອເຮັດໃຫ້ການຕິດຕາມກວດກາຂອງສະພາແຫ່ງຊາດມີຄວາມຊັດເຈນ, ການແກ້ ໄຂບັນຫາຖືກຕ້ອງ, ແທດກັບຄວາມເປັນຈິງ ແລະມີປະສິດທິຜົນນັ້ນ ສະພາແຫ່ງຊາດປະສານສົມທົບວຽກງານກັບພາກສ່ວນອື່ນໆທີ່ກ່ຽວຂ້ອງ ເປັນຕົ້ນ ອົງການກວດກາລັດ, ອົງການກວດ ສອບບັນຊີແຫ່ງລັດ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ.

## ມາດຕາ 9. ການແກ້ໄຂຜົນຂອງການຕິດຕາມກວດກາ

ຜ່ານການຕິດຕາມກວດກາ ຖ້າຫາກພົບເຫັນການຈັດຕັ້ງ ຫລືບຸກຄົນມີການກະທຳທີ່ເປັນການລະເມີດລະບຽບກົດໝາຍ, ກໍ່ຄວາມເສຍຫາຍໃຫ້ແກ່ປະເທດຊາດ ຫລືສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນນັ້ນ ສະພາແຫ່ງຊາດ ແລະອົງການທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງ ຕ້ອງມີມາດຕະການທີ່ມີປະສິດທິຜົນ ເພື່ອແກ້ໄຂຕາມລະບຽບກົດໝາຍຢ່າງເດັດຂາດ ແລະທັນເວລາ.

## ພາກທີ II ການຕິດຕາມກວດກາຂອງສະພາແຫ່ງຊາດ

### ໝວດທີ I ການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ

#### ມາດຕາ 10. ເນື້ອໃນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ

ກອງປະຊຸມສະພາແຫ່ງຊາດເຄື່ອນໄຫວຕິດຕາມກວດກາຕາມເນື້ອໃນຕົ້ນຕໍດັ່ງນີ້:

- ບົດລາຍງານຂອງປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ;
- ນິຕິກຳຂອງປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ທີ່ເຫັນວ່າຂັດກັບລັດຖະທຳມະນູນ, ກົດໝາຍ ຫລືມະຕິຕົກລົງຂອງກອງປະຊຸມສະ ພາແຫ່ງຊາດ. ສຳລັບນິຕິກຳຂອງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດທີ່ກ່າວມາເທິງນີ້ ແມ່ນນິຕິກຳ ທີ່ບໍ່ກ່ຽວກັບການດຳເນີນຄະດີ;
- ການຕອບຄຳຖາມຂອງປະທານປະເທດ, ປະທານສະພາແຫ່ງຊາດ ແລະຄະນະ ປະຈຳສະພາແຫ່ງຊາດ; ການຕອບຄຳຊັກຖາມຂອງນາຍົກລັດຖະມົນຕີ ແລະສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ;
- ການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ;
- ບົດລາຍງານຂອງຄະນະກຳມະການກວດກາຊົ່ວຄາວ ຊຶ່ງໄດ້ຮັບການຕົກລົງແຕ່ງຕັ້ງໂດຍກອງປະຊຸມສະພາແຫ່ງຊາດ ເພື່ອດຳເນີນການຕິດຕາມກວດກາລະອຽດ ບັນຫາໃດໜຶ່ງ.

#### ມາດຕາ 11. ການສ້າງແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ

ແຜນການເຄື່ອນໄຫວຕິດຕາມກວດກາປະຈຳປີຂອງກອງປະຊຸມສະພາແຫ່ງຊາດແມ່ນອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາແຫ່ງຊາດ, ສູນກາງແນວລາວ ສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ແລະອົງການຈັດຕັ້ງສັງຄົມ.

ຄະນະປະຈຳສະພາແຫ່ງຊາດເປັນຜູ້ຮ່າງແຜນການດັ່ງກ່າວ ແລະສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາ ແລະຕົກລົງ. ໃນກໍລະນີທີ່ຈຳເປັນ ຈະດຳເນີນການຕິດຕາມ ກວດກາການອອກແຜນການກໍໄດ້ ຕາມການຕົກລົງຂອງກອງປະຊຸມສະພາແຫ່ງຊາດ.

### ມາດຕາ 12. ການພິຈາລະນາບົດລາຍງານຂອງພາກສ່ວນຕ່າງໆ

ໃນກອງປະຊຸມສະໄໝສາມັນຕົ້ນປີ ສະພາແຫ່ງຊາດ ຮັບຟັງ ແລະພິຈາລະນາບົດລາຍງານຂອງນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ; ພິຈາລະນາ, ຮັບຮອງເອົາການດັດແກ້ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຫົກເດືອນຕົ້ນປີ ຖ້າມີ; ຮັບຟັງ ແລະພິຈາລະນາ ບົດລາຍງານຂອງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍ ໃນຫົກເດືອນຕົ້ນປີ; ຮັບຟັງ, ພິຈາລະນາ ແລະຮັບຮອງເອົາບົດລາຍງານ ຂອງຄະນະປະຈຳສະພາແຫ່ງຊາດ ຫົກເດືອນຕົ້ນປີ.

ໃນກອງປະຊຸມສະໄໝສາມັນທ້າຍປີ ສະພາແຫ່ງຊາດຮັບຟັງ, ພິຈາລະນາ ແລະຮັບ ຮອງເອົາບົດລາຍງານຂອງນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດປະຈຳປີ ແລະທິດທາງແຜນການພັດທະນາ ເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດໃນປີຕໍ່ໄປ; ຮັບຟັງ ແລະພິຈາລະນາບົດ ລາຍງານກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍປະຈຳປີ ແລະທິດທາງວຽກງານ ສຳລັບປີຕໍ່ໄປຂອງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ; ຮັບຟັງ, ພິຈາລະນາ ແລະຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປະຈຳປີ ແລະ ທິດທາງໜ້າທີ່ວຽກງານໃນປີຕໍ່ໄປຂອງສະພາແຫ່ງຊາດ.

ໃນກອງປະຊຸມສະໄໝສາມັນທ້າຍອາຍຸການຂອງສະພາແຫ່ງຊາດ ກອງປະຊຸມສະພາ ແຫ່ງຊາດ ຮັບຟັງ, ພິຈາລະນາ ແລະຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານຕະ ຫຼອດອາຍຸການຂອງປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ປະທານ ສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ.

ກອງປະຊຸມສະພາແຫ່ງຊາດ ຈະສະເໜີໃຫ້ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ ມາໃຫ້ຄວາມກະຈ່າງ ແຈ້ງກ່ຽວກັບບັນຫາໃດໜຶ່ງສະເພາະ ໃນເມື່ອເຫັນວ່າມີຄວາມຈຳເປັນ.

ບົດລາຍງານທີ່ໄດ້ກຳນົດໄວ້ໃນມາດຕານີ້ ຕ້ອງໄດ້ຜ່ານການຄົ້ນຄວ້າ, ພິຈາລະນາ ຂອງກຳມາທິການທີ່ກ່ຽວຂ້ອງເສຍກ່ອນ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ ຍົກເວັ້ນແຕ່ບົດລາຍງານຂອງປະທານປະເທດ, ປະທານສະພາແຫ່ງຊາດ ແລະຂອງຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມສະພາແຫ່ງຊາດ ຮັບຟັງ, ພິຈາລະນາ ບົດລາຍງານຕາມຂັ້ນຕອນດັ່ງນີ້:

1. ປະທານປະເທດ, ປະທານສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ນາ ຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາ ຊົນສູງ ສຸດ ສະເໜີບົດລາຍງານວຽກງານຂອງຕົນ;
2. ຫົວໜ້າກຳມາທິການຂອງສະພາແຫ່ງຊາດ ທີ່ຖືກມອບໝາຍ ໂດຍຄະນະປະ ຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານວຽກງານດັ່ງກ່າວ;
3. ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ, ອາດຈະຕັ້ງຄຳຖາມ ຫລືຄຳຊັກຖາມ;
4. ຜູ້ສະເໜີບົດລາຍງານ ລວມທັງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະ ຊວງທີ່ກ່ຽວຂ້ອງໃຫ້ຄຳຊີ້ແຈງ, ຕອບຄຳຖາມ ຫລືຄຳຊັກຖາມຕໍ່ບັນຫາທີ່ກອງ ປະຊຸມສະພາແຫ່ງຊາດ ມີຄວາມສົນໃຈ;
5. ກອງປະຊຸມສະພາແຫ່ງຊາດ ລົງມະຕິກ່ຽວກັບບົດລາຍງານ, ການໃຫ້ຄວາມ ກະຈ່າງແຈ້ງ, ການຕອບຄຳຖາມ ຫລືຄຳຊັກຖາມນັ້ນ ຖ້າເຫັນວ່າມີຄວາມ ຈຳເປັນ.

### ມາດຕາ 13. ການຕິດຕາມກວດການິຕິກຳຕ່າງໆ

ກອງປະຊຸມສະພາແຫ່ງຊາດ ມີສິດຍົກເລີກບາງສ່ວນ ຫລືທັງໝົດນິຕິກຳ ຂອງ ປະທານປະເທດ, ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ນາຍົກລັດຖະມົນຕີ, ປະທານສານ ປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ສູນກາງແນວລາວ ສ້າງຊາດ, ອົງການຈັດຕັ້ງ ມະຫາຊົນຂັ້ນສູນກາງ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ຫລືມະຕິຕົກລົງຂອງກອງປະຊຸມ ສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳ ສະພາແຫ່ງຊາດ ຫລືຕາມການສະເໜີ ໜຶ່ງສ່ວນສີ່ ຂອງຈຳນວນສະມາຊິກສະພາ ແຫ່ງຊາດທັງໝົດ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ 15 ມາດຕາ 3 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ. ນິຕິກຳຕ່າງໆທີ່ເຫັນວ່າຂັດກັບລັດຖະທຳມະນູນ, ກົດໝາຍ ຫລືມະ ຕິຕົກລົງຂອງກອງ ປະຊຸມສະພາແຫ່ງຊາດນັ້ນ ສະມາຊິກສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄວາມເຫັນ; ຈາກນັ້ນຜູ້ອອກນິຕິກຳດັ່ງກ່າວ ຊີ້ແຈງອະທິບາຍ. ໃນກໍລະນີທີ່ກອງ ປະຊຸມສະພາແຫ່ງຊາດ ບໍ່ເຫັນ ດີນຳຄຳຊີ້ແຈງອະທິບາຍນັ້ນ ກອງປະຊຸມສະພາແຫ່ງຊາດ ລົງມະຕິ ກ່ຽວກັບການຍົກເລີກນິຕິກຳນັ້ນ.

### ມາດຕາ 14. ການຊັກຖາມ ແລະການຕອບຄຳຊັກຖາມ

ໃນກອງປະຊຸມສະພາແຫ່ງຊາດ ການຖາມ, ການຊັກຖາມ ແລະການຕອບ ຄຳຖາມ ຫລືຄຳຊັກຖາມ ໃຫ້ປະຕິບັດດັ່ງລຸ່ມນີ້:

1. ສະມາຊິກສະພາແຫ່ງຊາດ ສົ່ງຄຳຖາມ ຫລືຄຳຊັກຖາມໃຫ້ຜູ້ທີ່ຖືກຖາມ ຫລືຖືກຊັກຖາມຢ່າງລະອຽດ ໂດຍຜ່ານປະທານກອງປະຊຸມສະພາແຫ່ງຊາດ;
2. ການຕອບຄຳຖາມ ຫລືຄຳຊັກຖາມໃນກອງປະຊຸມແຕ່ລະຄັ້ງ ໃຫ້ປະຕິບັດຕາມ ຂັ້ນຕອນດັ່ງນີ້:
   - ຜູ້ຖືກຖາມ ຫລືຖືກຊັກຖາມ ຕ້ອງຕອບໂດຍກົງ ຕາມເນື້ອໃນຂອງບັນຫາ ທີ່ສະມາຊິກສະພາແຫ່ງຊາດ ຖາມ ຫລືຊັກຖາມນັ້ນ ຢ່າງເຈາະຈີ້ງ, ຈະແຈ້ງ, ຄົບຖ້ວນ. ໃນກໍລະນີຈຳເປັນທີ່ບໍ່ສາມາດມາຕອບໂດຍກົງໄດ້ ກໍ ຕ້ອງຕອບເປັນລາຍລັກອັກສອນ;
   - ສະມາຊິກສະພາແຫ່ງຊາດ ມີສິດຕັ້ງຄຳຖາມ ຫລືຄຳຊັກຖາມເພີ່ມເຕີມຕໍ່ ການຕອບຄຳຖາມ ຫລືຄຳຊັກຖາມທີ່ບໍ່ທັນຈະແຈ້ງ;
3. ພາຍຫລັງຟັງການຕອບຄຳຖາມ ຫລືຄຳຊັກຖາມແລ້ວ ຖ້າສະມາຊິກສະພາແຫ່ງຊາດ ຫາກບໍ່ເຫັນດີນຳຄຳຕອບນັ້ນ ກໍມີສິດສະເໜີໃຫ້ກອງປະຊຸມສະພາແຫ່ງຊາດ ສືບຕໍ່ຄົ້ນຄວ້າໃນວາລະກອງປະຊຸມນັ້ນ ຫລືໃນກອງປະຊຸມຄັ້ງຕໍ່ໄປ, ຖ້າເຫັນວ່າຈຳເປັນກໍສະເໜີໃຫ້ກອງປະຊຸມລົງມະຕິ ກ່ຽວກັບຕຳແໜ່ງ, ໜ້າທີ່ຂອງຜູ້ຖືກຖາມ ຫລືຖືກຊັກຖາມ;
4. ຜູ້ທີ່ໄດ້ຕອບຄຳຖາມ ຫລືຄຳຊັກຖາມຢູ່ໃນກອງປະຊຸມສະພາແຫ່ງຊາດແລ້ວນັ້ນ ກໍຍັງມີຄວາມຮັບຜິດຊອບລາຍງານ ຕໍ່ກອງປະຊຸມສະພາແຫ່ງຊາດໃນຄັ້ງຕໍ່ໄປ ກ່ຽວ ກັບບັນຫາທີ່ຕົນໄດ້ສັນຍາໄວ້, ສະມາຊິກສະພາແຫ່ງຊາດ ມີສິດ ຕັ້ງຄຳຖາມ ຫລື ຄຳຊັກຖາມຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3 ເທິງ ນີ້.

   ກຳນົດເວລາຂອງການຕັ້ງຄຳຖາມ ຫລືຄຳຊັກຖາມ ແລະການຕອບຄຳຖາມ ຫລືຄຳຊັກຖາມ ແມ່ນກຳນົດໄວ້ໃນລະບຽບວາລະຂອງ ກອງປະຊຸມສະພາ ແຫ່ງຊາດແຕ່ລະຄັ້ງ.

### ມາດຕາ 15. ການຕິດຕາມກວດກາ ກ່ຽວກັບການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ

ກອງປະຊຸມສະພາແຫ່ງຊາດ ຕິດຕາມກວດກາການຈັດຕັ້ງປະຕິບັດລະບຽບ ກົດໝາຍ ກ່ຽວກັບການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ ໂດຍຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ.

### ມາດຕາ 16. ການແຕ່ງຕັ້ງຄະນະກຳມະການຊົ່ວຄາວຂອງສະພາແຫ່ງຊາດ

ປະທານສະພາແຫ່ງຊາດ ແຕ່ງຕັ້ງຄະນະກຳມະການຊົ່ວຄາວຂອງກອງປະຊຸມສະພາ ແຫ່ງຊາດ ຕາມການຕົກລົງຂອງກອງປະຊຸມສະພາແຫ່ງຊາດ ພ້ອມທັງກຳນົດສິດ ແລະໜ້າທີ່ ຂອງຄະນະດັ່ງກ່າວ ເພື່ອຕິດຕາມກວດກາລະອຽດບັນຫາໃດໜຶ່ງ ທີ່ເຫັນ

ວ່າມີຄວາມຈຳເປັນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ກຳມາທິການຂອງ ສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສູນກາງ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຫລືອົງການຈັດຕັ້ງສັງຄົມ.

ຄະນະກຳມະການຊົ່ວຄາວ ປະກອບດ້ວຍສະມາຊິກສະພາແຫ່ງຊາດ ແລະພະນັກ ງານວິຊາການທີ່ກ່ຽວຂ້ອງຈຳນວນໜຶ່ງ ແລະຈະຖືກຍຸບເລີກໄປໃນຕົວ ພາຍຫລັງທີ່ໄດ້ປະຕິບັດ ສຳເລັດໜ້າທີ່ວຽກງານແລ້ວ.

ມະຕິແຕ່ງຕັ້ງຄະນະກຳມະການຊົ່ວຄາວ ຈະຕ້ອງສົ່ງໃຫ້ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ແລະອົງການທີ່ກ່ຽວຂ້ອງນັ້ນຊາບ ເຈັດວັນ ກ່ອນຈະດຳ ເນີນການຕິດຕາມ ກວດກາ.

ຄະນະກຳມະການຊົ່ວຄາວມີສິດ ແລະໜ້າທີ່ດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງ ກົດໝາຍສະບັບນີ້.

## ມາດຕາ 17. ການພິຈາລະນາຜົນຂອງການຕິດຕາມກວດກາ

ກອງປະຊຸມສະພາແຫ່ງຊາດ ພິຈາລະນາຜົນການຕິດຕາມກວດກາຂອງຄະນະກຳມະການຊົ່ວຄາວ ຕາມຂັ້ນຕອນດັ່ງນີ້:

- ຫົວໜ້າຄະນະກຳມະການຊົ່ວຄາວ ລາຍງານຜົນຂອງການຕິດຕາມກວດກາ;
- ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ຊີ້ແຈງ ອະທິບາຍ;
- ກອງປະຊຸມສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;
- ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ມີສິດຊີ້ແຈງ ອະທິບາຍ ເພີ່ມເຕີມ;
- ກອງປະຊຸມສະພາແຫ່ງຊາດ ລົງມະຕິກ່ຽວກັບຜົນຂອງການຕິດຕາມກວດການັ້ນ.

## ມາດດຕາ 18. ການລົງຄະແນນສຽງ ກ່ຽວກັບການປົດຕຳແໜ່ງ ຫລືບໍ່ໄວ້ວາງໃຈ

ກອງປະຊຸມສະພາແຫ່ງຊາດ ມີສິດລົງຄະແນນສຽງ ກ່ຽວກັບການປົດຕຳແໜ່ງ ຫລືບໍ່ ໄວ້ວາງໃຈຕໍ່ຜູ້ທີ່ກອງປະຊຸມສະພາແຫ່ງຊາດເປັນຜູ້ເລືອກຕັ້ງ ຫລືຮັບຮອງເອົາ ຕາມທີ່ໄດ້ກຳ ນົດໄວ້ໃນມາດຕາ 53 ແລະມາດຕາ 74 ຂອງລັດຖະທຳມະນູນ.

ການອະພິປາຍ ແລະລົງຄະແນນສຽງ ກ່ຽວກັບການປົດຕຳແໜ່ງ ຫລືບໍ່ໄວ້ວາງໃຈຢູ່ ໃນກອງປະຊຸມສະພາແຫ່ງຊາດ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

- ຜູ້ຕາງໜ້າກອງປະຊຸມ ຍົກບັນຫາຂຶ້ນ;
- ຜູ້ທີ່ຖືກສະເໜີໃຫ້ກອງປະຊຸມສະພາແຫ່ງຊາດ ລົງຄະແນນສຽງ ກ່ຽວກັບການປົດ ຕຳແໜ່ງ ຫລືບໍ່ໄວ້ວາງໃຈ ຊີ້ແຈງ ອະທິບາຍ;
- ກອງປະຊຸມສະພາແຫ່ງຊາດ ຄົ້ນຄວ້າ, ປະກອບຄຳເຫັນ;

- ຜູ້ທີ່ຖືກສະເໜີໃຫ້ສະພາແຫ່ງຊາດ ລົງຄະແນນສຽງ ກ່ຽວກັບການປົດຕຳແໜ່ງ ຫລືບໍ່ໄວ້ວາງໃຈ ມີສິດຊີ້ແຈງອະທິບາຍເພີ້ມເຕີມ;
- ກອງປະຊຸມສະພາແຫ່ງຊາດ ລົງຄະແນນສຽງ ກ່ຽວກັບການປົດຕຳແໜ່ງ ຫລືບໍ່ໄວ້ວາງໃຈ.

ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ ກ່ຽວກັບການປົດຕຳແໜ່ງ ຂອງປະທານປະເທດ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບຄະແນນສຽງ ຢ່າງໜ້ອຍ ສອງສ່ວນສາມ ຂອງສະມາຊິກສະພາແຫ່ງຊາດທັງໝົດ, ສຳລັບບຸກຄົນອື່ນນັ້ນ ແມ່ນຕ້ອງໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂຶ້ນໄປ.

ໃນກໍລະນີທີ່ການລົງຄະແນນສຽງ ກ່ຽວກັບການບໍ່ໄວ້ວາງໃຈ ຕໍ່ລັດຖະບານ ຫລື ສະມາຊິກລັດຖະບານທ່ານໃດທ່ານໜຶ່ງ ຫາກໄດ້ຫລາຍກ່ວາເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດນັ້ນ ໃນໄລຍະເວລາ ຊາວສີ່ ຊົ່ວໂມງ ພາຍຫລັງທີ່ກອງປະຊຸມສະພາແຫ່ງ ຊາດໄດ້ລົງຄະແນນສຽງບໍ່ໄວ້ວາງໃຈແລ້ວ ປະທານປະເທດມີສິດສະເໜີໃຫ້ສະພາແຫ່ງຊາດ ພິຈາລະນາຄືນໃໝ່. ການພິຈາລະນາເທື່ອທີສອງ ຕ້ອງຫ່າງຈາກການພິຈາລະນາເທື່ອທີໜຶ່ງ ສີ່ສິບແປດ ຊົ່ວໂມງ ຖ້າວ່າການລົງມະຕິເທື່ອໃໝ່ ຫາກບໍ່ໄດ້ຮັບຄວາມໄວ້ວາງໃຈອີກ ຜູ້ທີ່ຖືກ ລົງຄະແນນສຽງນັ້ນຕ້ອງລາອອກ.

ນອກຈາກນີ້ ຖ້າຫາກມີບຸກຄົນອື່ນໄດ້ກະທຳຜິດ ທີ່ພົວພັນກັບບັນຫາດັ່ງກ່າວເທິງນີ້ແລ້ວ ກອງປະຊຸມສະພາແຫ່ງຊາດກໍມອບໃຫ້ອົງການທີ່ມີສິດ, ໜ້າທີ່ກ່ຽວຂ້ອງນຳໃຊ້ມາດຕະ ການຕາມລະບຽບກົດໝາຍ.

ອົງການທີ່ກ່ຽວຂ້ອງ ຕ້ອງຮັບຜິດຊອບປະຕິບັດຕາມມະຕິຕົກລົງ ຂອງກອງປະຊຸມສະພາແຫ່ງຊາດຢ່າງເຂັ້ມງວດ ແລ້ວລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດຊາບ ພາຍໃນ ກຳນົດ ຫົກສິບ ວັນ.

## ໝວດທີ II ການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ

### ມາດຕາ 19. ເນື້ອໃນຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ

ຄະນະປະຈຳສະພາແຫ່ງຊາດ ເຄື່ອນໄຫວຕິດຕາມກວດກາຕາມເນື້ອໃນຕົ້ນຕໍດັ່ງນີ້:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດຂອງລັດຖະບານ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ຂອງເຈົ້າແຂວງ, ເຈົ້າຄອງນະຄອນ ແລະຫົວໜ້າ ເຂດພິເສດ;
2. ນິຕິກຳຂອງປະທານປະເທດ, ລັດຖະບານ, ນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ເຈົ້າແຂວງ, ເຈົ້າຄອງ

ນະຄອນ ແລະ ຫົວໜ້າເຂດ ພິເສດທີ່ເຫັນວ່າຂັດກັບລັດຖະທຳມະນູນ, ກົດໝາຍ ຫລືມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ. ສຳລັບນິຕິກຳຂອງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ທີ່ກ່າວມາເທິງນີ້ ແມ່ນນິຕິກຳທີ່ບໍ່ກ່ຽວກັບການດຳເນີນຄະດີ;

3. ການໃຫ້ຄວາມກະຈ່າງແຈ້ງຂອງນາຍົກລັດຖະມົນຕີ ແລະສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ເຈົ້າແຂວງ, ເຈົ້າ ຄອງນະຄອນ ແລະຫົວໜ້າເຂດພິເສດໃນກໍລະນີທີ່ເຫັນວ່າຈຳເປັນ;
4. ບົດລາຍງານການເຄື່ອນໄຫວວຽກງານຕິດຕາມກວດກາ ຂອງກຳມາທິການຂອງ ສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາແຫ່ງ ຊາດ;
5. ການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ;
6. ບົດລາຍງານຂອງຄະນະສະເພາະກິດ ກ່ຽວກັບບັນຫາໃດໜຶ່ງ.

## ມາດຕາ 20. ການສ້າງແຜນການຕິດຕາມກວດກາ

ຄະນະປະຈຳສະພາແຫ່ງຊາດ ສ້າງແຜນການຕິດຕາມກວດກາຂອງຕົນ ປະຈຳທຸກເດືອນ ແລະໜຶ່ງປີ ໂດຍອີງຕາມແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ ແລະຕາມການສະເໜີຂອງກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນ ສູນກາງ ແລະອົງການຈັດຕັ້ງສັງຄົມ.

ພາຍຫລັງທີ່ໄດ້ຮັບຮອງເອົາແຜນການນັ້ນແລ້ວ ຄະນະປະຈຳສະພາແຫ່ງຊາດ ແບ່ງຄວາມຮັບຜິດຊອບໃຫ້ກຳມະການຄະນະປະຈຳສະພາແຫ່ງຊາດ, ກຳມາທິການ ຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດ ແລ້ວລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດຊາບ ເພື່ອມີວິທີການ ແລະມາດຕະການແກ້ໄຂ ຢ່າງເໝາະສົມ ແລະ ທັນເວລາ.

## ມາດຕາ 21. ການພິຈາລະນາການລາຍງານ

ໃນລະຫວ່າງສອງກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດພິຈາລະນາການລາຍງານວຽກງານຂອງລັດຖະບານ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ເຈົ້າແຂວງ, ເຈົ້າຄອງນະຄອນ ແລະຫົວໜ້າເຂດພິເສດ ລວມທັງບົດລາຍງານ ກ່ຽວກັບການຕິດຕາມກວດກາ ຂອງກຳມາທິການສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ; ຖ້າເຫັນວ່າມີຄວາມຈຳເປັນກໍເຊີນອົງການ ຫລືບຸກຄົນ ເຫລົ່ານັ້ນ ມາໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາໃດໜຶ່ງຕື່ມອີກ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຮັບຟັງ, ພິຈາລະນາການລາຍງານ ຕາມ ຂັ້ນຕອນ ດັ່ງລຸ່ມນີ້:

- ບຸກຄົນ ຫລືການຈັດຕັ້ງທີ່ກ່ຽວຂ້ອງລາຍງານ;
- ຫົວໜ້າກຳມາທິການຂອງສະພາແຫ່ງຊາດ ທີ່ຖືກຕ້ອງມອບໝາຍ ສະເໜີຄວາມເຫັນ;
- ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ມີຄວາມເຫັນ;
- ຜູ້ລາຍງານ ມີສິດຊີ້ແຈງ ອະທິບາຍເພີ້ມເຕີມ;
- ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ລົງມະຕິ ກ່ຽວກັບການລາຍງານນັ້ນ.

## ມາດຕາ 22. ການຕິດຕາມກວດການິຕິກຳ

ຄະນະປະຈຳສະພາແຫ່ງຊາດ ຊຸກຍູ້ໃຫ້ລັດຖະບານ, ນາຍົກລັດຖະມົນຕີ, ປະທານ ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນ ແລະຫົວໜ້າເຂດພິເສດ ອອກນິຕິກຳ ເພື່ອຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ໃຫ້ທັນເວລາ ແລະຕິດຕາມກວດກາ, ພິຈາລະນານິຕິກຳເຫລົ່ານັ້ນ. ກ່ອນຈະພິຈາລະນາຄະນະປະຈຳສະພາແຫ່ງຊາດມອບນິຕິກຳນັ້ນ ໃຫ້ກຳມາທິການຂອງສະພາແຫ່ງຊາດທີ່ກ່ຽວຂ້ອງຄົ້ນຄວ້າ, ກະ ກຽມປະກອບຄຳເຫັນເສຍກ່ອນ.

ຄະນະປະຈຳສະພາແຫ່ງຊາດ ມີສິດໂຈະການຈັດຕັ້ງປະຕິບັດນິຕິກຳ ຂອງລັດຖະບານ, ນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ສູນກາງ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ບາງສ່ວນ ຫລືທັງໝົດທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ຫລືມະຕິຕົກລົງກອງປະຊຸມສະພາແຫ່ງຊາດ ແລ້ວນຳສະເໜີຕໍ່ກອງ ປະຊຸມສະພາແຫ່ງຊາດ ລົງມະຕິ ກ່ຽວກັບການຍົກເລີກນິຕິກຳນັ້ນ.

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນານິຕິກຳຕ່າງໆ ຕາມຂັ້ນຕອນ ດັ່ງລຸ່ມນີ້:

- ຫົວໜ້າກຳມາທິການຂອງສະພາແຫ່ງຊາດ ທີ່ກ່ຽວຂ້ອງ ສະເໜີຄຳເຫັນ;
- ຜູ້ທີ່ອອກນິຕິກຳດັ່ງກ່າວ ຊີ້ແຈງ ອະທິບາຍ;
- ຄະນະປະຈຳສະພາແຫ່ງຊາດ ຄົ້ນຄວ້າ, ມີຄຳເຫັນ;
- ຜູ້ທີ່ອອກນິຕິກຳດັ່ງກ່າວ ມີສິດຊີ້ແຈງ ອະທິບາຍເພີ້ມເຕີມ;
- ຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ລົງມະຕິ ກ່ຽວກັບນິຕິກຳນັ້ນ.

## ມາດຕາ 23. ການຕິດຕາມກວດກາການເລືອກຕັ້ງສະມາຊິກສະພາແຫ່ງຊາດ

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ແຕ່ງຕັ້ງຄະນະກຳມະການເລືອກຕັ້ງລະດັບຊາດ

ແລະຕິດຕາມກວດກາການເຄື່ອນໄຫວວຽກງານ ຂອງຄະນະກຳມະການດັ່ງກ່າວ ເພື່ອເຮັດໃຫ້ ການເລືອກຕັ້ງໄດ້ດຳເນີນໄປຢ່າງມີປະຊາທິປະໄຕ, ຖືກຕ້ອງຕາມກົດໝາຍວ່າດ້ວຍການເລືອກ ຕັ້ງສະມາຊິກສະພາແຫ່ງຊາດ ແລະກົດໝາຍອື່ນໆ.

## ມາດຕາ 24. ການຕິດຕາມກວດກາ ກ່ຽວກັບການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາ ຊົນ

ຄະນະປະຈຳສະພາແຫ່ງຊາດ ຕິດຕາມກວດກາລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ຫ້ອງວ່າການຂອງສະພາແຫ່ງຊາດ, ຄະນະສະມາຊິກ ສະພາແຫ່ງຊາດໃນການປະຕິບັດລະບຽບກົດໝາຍ ກ່ຽວກັບການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ.

ຜ່ານການຕິດຕາມກວດກາ ຖ້າເຫັນວ່າການຈັດຕັ້ງ ແລະບຸກຄົນ ມີການລະເມີດລະ ບຽບກົດໝາຍ, ກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດຂອງຊາດ, ສິດ ແລະຜົນປະໂຫຍດອັນ ຊອບທຳຂອງການຈັດຕັ້ງ ຫລືບຸກຄົນອື່ນນັ້ນ ຄະນະປະຈຳສະພາແຫ່ງຊາດຈະສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງນຳໃຊ້ມາດຕະການ ເພື່ອຢຸດຕິການລະເມີດນັ້ນ ໂດຍທັນທີ ພ້ອມກັນນັ້ນກໍສະເໜີໃຫ້ພິຈາລະນາ ການປະຕິບັດວິໄນ ຫລືນຳໃຊ້ມາດຕະການ ອື່ນ ຕາມລະບຽບກົດໝາຍຕໍ່ຜູ້ທີ່ກະທຳຜິດດັ່ງກ່າວ ລວມທັງໃຫ້ໃຊ້ແທນຄ່າເສຍຫາຍທີ່ຜູ້ກ່ຽວ ໄດ້ກໍ່ຂຶ້ນ. ຖ້າການຈັດຕັ້ງ ຫລືບຸກຄົນທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງນັ້ນ ຫາກແກ້ໄຂບໍ່ເໝາະສົມ ແລ້ວຄະນະປະຈຳສະພາແຫ່ງຊາດຈະສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ມີສິດ, ໜ້າທີ່ຂັ້ນເທິງຖັດນັ້ນ ພິຈາລະນາ ກ່ຽວກັບການແກ້ໄຂ. ການຈັດຕັ້ງ ຫລືບຸກຄົນທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງຕ້ອງປະຕິບັດຢ່າງເຂັ້ມງວດ ຕາມຄຳສະເໜີຂອງຄະນະປະຈຳສະພາແຫ່ງຊາດ ພາຍໃນ
ກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີໃຫ້ແກ້ໄຂເປັນຕົ້ນໄປ ແລະຕ້ອງລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດຊາບ ກ່ຽວກັບການແກ້ໄຂ.

## ມາດຕາ 25. ການແຕ່ງຕັ້ງຄະນະສະເພາະກິດ

ຄະນະປະຈຳສະພາແຫ່ງຊາດ ແຕ່ງຕັ້ງຄະນະສະເພາະກິດຂອງຕົນຂຶ້ນ ເພື່ອຕິດຕາມ ກວດກາລະອຽດບັນຫາໃດໜຶ່ງທີ່ເຫັນວ່າມີຄວາມຈຳເປັນ ຕາມການສະເໜີ ຂອງກຳມາທິການ ຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ສູນ ກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຫລືອົງການຈັດຕັ້ງສັງຄົມ.

ໃນມະຕິຕົກລົງແຕ່ງຕັ້ງຂອງຄະນະປະຈຳສະພາແຫ່ງຊາດນັ້ນ ຕ້ອງກຳນົດລະອຽດ ເນື້ອໃນ, ສິດ, ໜ້າທີ່ ລວມທັງໂຄງປະກອບບຸກຄະລາກອນ ຂອງຄະນະສະເພາະກິດຕາມທີ່ ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ແລະເປົ້າໝາຍຂອງການຕິດຕາມກວດກາ ແລ້ວສົ່ງມະຕິຕົກລົງແຕ່ງຕັ້ງດັ່ງກ່າວໃຫ້ການຈັດຕັ້ງ ຫລືບຸກຄົນທີ່

ຖືກຕິດຕາມກວດກາ ແລະອີງການທີ່ກ່ຽວຂ້ອງຊາບລ່ວງໜ້າ ເຈັດວັນ ກ່ອນຈະດຳເນີນການຕິດຕາມກວດກາ.

ໃນເວລາຕິດຕາມກວດການັ້ນຄະນະສະເພາະກິດມີສິດ ແລະໜ້າທີ່ດັ່ງນີ້:

- ສະເໜີໃຫ້ການຈັດຕັ້ງ, ບຸກຄົນທີ່ຖືກຕິດຕາມກວດກາ ລາຍງານເປັນລາຍລັກອັກສອນ, ສະໜອງຂໍ້ມູນ, ເອກະສານຕ່າງໆທີ່ກ່ຽວຂ້ອງກັບເນື້ອໃນຕິດຕາມກວດກາ, ຊີ້ແຈງ, ອະທິບາຍບັນຫາທີ່ຄະນະສະເພາະກິດມີຄວາມສົນໃຈ;
- ພິຈາລະນາ, ຕີລາຄາບົດລາຍງານ, ຂໍ້ມູນ, ເອກະສານຕ່າງໆ ຂອງຜູ້ຖືກຕິດຕາມ ກວດກາ;
- ເມື່ອພົບເຫັນການຈັດຕັ້ງ ຫຼືບຸກຄົນ ມີການລະເມີດລະບຽບກົດໝາຍ, ກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດຂອງຊາດ, ສິດ ແລະຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ຫລືບຸກຄົນນັ້ນ ຄະນະສະເພາະກິດ ມີສິດໃຫ້ຄຳແນະນຳແກ່ຜູ້ຖືກຕິດ ຕາມກວດກາ ກ່ຽວກັບການແກ້ໄຂ ແລະສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອທວງໃຫ້ການຈັດຕັ້ງ ຫລືບຸກຄົນດັ່ງກ່າວນັ້ນຢຸດຕິການລະເມີດລະບຽບກົດໝາຍ ແລະຟື້ນຟູສິດ, ຜົນປະໂຫຍດຂອງຊາດ, ສິດ ແລະຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ແລະບຸກຄົນທີ່ຖືກລະເມີດ ແລະທວງໃຫ້ການຈັດຕັ້ງ, ບຸກຄົນທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງພິຈາລະນາການປະຕິບັດວິໄນ ແລະໃຊ້ມາດຕາການ ອື່ນຕາມລະບຽບກົດໝາຍ ຕໍ່ຜູ້ທີ່ລະເມີດ;
- ປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນ, ສິດ, ໜ້າທີ່ຕິດຕາມກວດກາທີ່ບົ່ງໄວ້ໃນມະຕິກົລົງວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ;
- ຄະນະສະເພາະກິດ ຕ້ອງສົ່ງບົດລາຍງານກ່ຽວກັບຜົນ ຂອງການຕິດຕາມກວດກາ ໃຫ້ຄະນະປະຈຳສະພາແຫ່ງຊາດ ພາຍໃນກຳນົດ ສິບວັນ ນັບແຕ່ວັນສິ້ນສຸດການ ຕິດຕາມກວດກາເປັນຕົ້ນໄປ.

## ມາດຕາ 26. ການພິຈາລະນາການລາຍງານຂອງຄະນະສະເພາະກິດ

ຄະນະປະຈຳສະພາແຫ່ງຊາດ ພິຈາລະນາການລາຍງານຂອງຄະນະສະເພາະກິດຕາມຂັ້ນຕອນດັ່ງລຸ່ມນີ້:

- ຫົວໜ້າຄະນະສະເພາະກິດລາຍງານ;
- ການຈັດຕັ້ງ ຫຼືບຸກຄົນ ທີ່ຖືກຕິດຕາມກວດກາ ຊີ້ແຈງ ອະທິບາຍ;
- ຕົວແທນຂອງການຈັດຕັ້ງທີ່ຖືກເຊີນ ເຂົ້າຮ່ວມກອງປະຊຸມມີຄຳເຫັນ;
- ກອງປະຊຸມຄະນະປະຈຳສະພາແຫ່ງຊາດຄົ້ນຄ້ວາ, ພິຈາລະນາ;
- ການຈັດຕັ້ງ ຫຼືບຸກຄົນທີ່ຖືກຕິດຕາມກວດກາ ມີສິດຊີ້ແຈງອະທິບາຍ ເພີ່ມເຕີມ;

- ຄະນະປະຈຳສະພາແຫ່ງຊາດ ລົງມະຕິກ່ຽວກັບບັນຫາທີ່ຖືກຕິດຕາມກວດກາ.

**ມາດຕາ 27. ການພິຈາລະນາ, ແກ້ໄຂຜົນຂອງການຕິດຕາມກວດກາ**

ຄະນະປະຈຳສະພາແຫ່ງຊາດ ມີສິດແກ້ໄຂຜົນຂອງການຕິດຕາມກວດກາ ດັ່ງຕໍ່ໄປນີ້:

1. ທວງໃຫ້ການຈັດຕັ້ງ ຫລືບຸກຄົນທີ່ມີສິດ, ໜ້າທີ່ກ່ຽວຂ້ອງ ຢຸດຕິການລະເມີດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ, ແຜນ ພັດທະນາເສດຖະກິດ-ສັງຄົມ ຫລືແຜນງົບປະມານແຫ່ງລັດ ໂດຍທັນທີ ແລະຄົ້ນ ຄວ້າປະຕິບັດວິໄນ ຫລືນຳໃຊ້ມາດຕະການອື່ນຕາມລະບຽບກົດໝາຍຕໍ່ຜູ້ທີ່ລະເມີດ,ພ້ອມກັນນັ້ນກໍໃຫ້ຜູ້ລະເມີດຟື້ນຟູຜົນປະໂຫຍດ ຂອງຊາດ ຫລືສິດ, ຜົນປະ ໂຫຍດອັນຊອບທຳຂອງການຈັດຕັ້ງ ຫລືບຸກຄົນທີ່ຖືກລະເມີດ;
2. ໂຈະການປະຕິບັດນິຕິກຳຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງ ປະຊຸມສະພາແຫ່ງຊາດ ຫລືຂອງຄະນະປະຈຳສະພາແຫ່ງຊາດ ແລ້ວລາຍງານ ໃຫ້ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຕົກລົງ ກ່ຽວກັບການຍົກເລີກນິຕິ ກຳນັ້ນ;
3. ລົງມະຕິ ກ່ຽວກັບການໃຫ້ຄວາມກະຈ່າງແຈ້ງບັນຫາໃດໜຶ່ງຂອງການຈັດຕັ້ງ ຫລື ບຸກຄົນ ທີ່ຄະນະປະຈຳສະພາແຫ່ງຊາດ ເຊີນມາຊີ້ແຈງ, ອະທິບາຍ;
4. ສະເໜີໃຫ້ກອງປະຊຸມສະພາແຫ່ງຊາດ ລົງມະຕິປົດຕຳແໜ່ງ ຫລືບໍ່ໄວ້ວາງໃຈຕໍ່ຜູ້ທີ່ດຳລົງຕຳແໜ່ງ ຊຶ່ງກອງປະຊຸມສະພາແຫ່ງຊາດ ເປັນຜູ້ເລືອກຕັ້ງ ຫລືຮັບຮອງ.

## ໝວດທີ III ການຕິດຕາມກວດກາຂອງກຳມາທິການ ຂອງສະພາແຫ່ງຊາດ

**ມາດຕາ 28. ເນື້ອໃນຕິດຕາມກວດກາຂອງກຳມາທິການ**

ການຕິດຕາມກວດກາຂອງກຳມາທິການຂອງສະພາແຫ່ງຊາດ ມີເນື້ອໃນຕົ້ນຕໍດັ່ງນີ້:

1. ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ຂອງກະຊວງ, ອົງການທຽບເທົ່າກະຊວງ, ປະທານສານປະຊາຊົນຂັ້ນອຸທອນ, ປະທານສານທະຫານຂັ້ນສູງ ແລະປະທານສານທະຫານພາກ, ໄອຍະການປະຊາຊົນຂັ້ນອຸທອນ, ໄອຍະການທະຫານຂັ້ນສູງ ແລະໄອຍະການທະຫານ

ພາກ ແລະຄົ້ນຄວ້າບົດ ລາຍງານອື່ນໆ ຕາມການມອບໝາຍຂອງຄະນະປະຈໍາສະພາແຫ່ງຊາດເຊັ່ນ: ບົດລາຍງານການເຄື່ອນໄຫວວຽກງານ ຂອງລັດຖະບານ, ສານປະຊາຊົນສູງສຸດ, ອົງ ການໄອຍະການປະຊາຊົນສູງສຸດ;

ນອກຈາກການຕິດຕາມບົດລາຍງານແລ້ວ ກໍາມາທິການຂອງສະພາແຫ່ງຊາດ ຍັງມີສິດເຊີນອົງການ ຫລືບຸກຄົນທີ່ກ່ຽວຂ້ອງ ມາລາຍງານບັນຫາໃດໜຶ່ງ ທີ່ຕົນມີຄວາມສົນໃຈ;

2. ນິຕິກໍາຂອງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ປະທານສານປະຊາຊົນຂັ້ນອຸທອນ, ປະທານສານທະຫານຂັ້ນສູງ ແລະປະທານສານທະຫານພາກ, ໄອຍະການປະຊາຊົນຂັ້ນອຸທອນ, ໄອຍະການທະຫານຂັ້ນສູງ ແລະໄອຍະການ ທະຫານພາກ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈໍາສະພາ ແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ; ຄົ້ນຄວ້ານິຕິກໍາຂອງລັດຖະບານ, ນາຍົກລັດຖະມົນຕີ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ເຈົ້າແຂວງ, ເຈົ້າຄອງນະຄອນ ແລະຫົວໜ້າ ເຂດພິເສດ ຕາມການມອບໝາຍຂອງຄະນະປະຈໍາສະພາແຫ່ງຊາດ;

   ການຕິດຕາມກວດການິຕິກໍາຂອງສານປະຊາຊົນ ແລະໄອຍະການປະຊາຊົນນັ້ນ ແມ່ນນິຕິກໍາທີ່ບໍ່ກ່ຽວຂ້ອງກັບການດໍາເນີນຄະດີ;

3. ບົດລາຍງານຂອງໜ່ວຍງານສະເພາະກິດ.

### ມາດຕາ 29. ການສ້າງແຜນການຕິດຕາມກວດກາຂອງກໍາມາທິການ

ກໍາມາທິການຂອງສະພາແຫ່ງຊາດ ສ້າງແຜນການຕິດຕາມກວດກາຂອງຕົນເປັນແຕ່ ລະໄລຍະ ໂດຍອີງຕາມແຜນການຕິດຕາມກວດກາ ຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ ແລະຄໍາສະເໜີຂອງສະມາຊິກສະພາແຫ່ງຊາດ ໃນກໍາມາທິການ. ພາຍຫຼັງແຜນການໄດ້ຮັບຮອງເອົາແລ້ວ ກໍາມາທິການຕ້ອງແບ່ງຄວາມຮັບຜິດຊອບ ໃຫ້ສະມາຊິກສະພາແຫ່ງຊາດ ຢູ່ໃນກໍາມາທິການຂອງຕົນ ເພື່ອຈັດຕັ້ງປະຕິບັດ.

### ມາດຕາ 30. ການພິຈາລະນາບົດລາຍງານຂອງພາກສ່ວນຕ່າງໆ

ກໍາມາທິການຂອງສະພາແຫ່ງຊາດ ພິຈາລະນາບົດລາຍງານຂອງພາກສ່ວນຕ່າງໆ ຕາມຂັ້ນຕອນດັ່ງນີ້:

1. ຄົ້ນຄ້ວາ, ພິຈາລະນາບົດລາຍງານຂອງລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ປະທານສານຂັ້ນອຸທອນ, ປະທານສານທະຫານຂັ້ນສູງ, ປະທານສານທະຫານພາກ, ໄອຍະການປະຊາຊົນຂັ້ນອຸທອນ, ໄອຍະການທະຫານຂັ້ນສູງ ແລະ ໄອຍະການທະຫານພາກ; ຖ້າເຫັນວ່າມີຄວາມຈໍາເປັນ

ກໍເຊີນອົງການ ຫລືບຸກຄົນເຫລົ່ານັ້ນ ມາໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາໃດໜຶ່ງ;

ຖ້າເຫັນວ່າ ການຈັດຕັ້ງ ຫລືບຸກຄົນມີການລະເມີດລະບຽບກົດໝາຍແລ້ວ ກຳມາທິການຂອງສະພາແຫ່ງຊາດ ມີສິດສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ມີ ສິດໜ້າທີ່ກ່ຽວຂ້ອງແກ້ໄຂ ແລະແຈ້ງໃຫ້ກຳມາທິການ ຂອງສະພາແຫ່ງຊາດຊາບ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. ຖ້າຫາກບໍ່ ມີການແກ້ໄຂ ຫຼືແກ້ຂບໍ່ເໝາະສົມ ກໍລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາແກ້ໄຂ;

2. ຄົ້ນຄວ້າ, ພິຈາລະນາບົດລາຍງານຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ເຈົ້າແຂວງ, ເຈົ້າຄອງນະຄອນ ແລະຫົວໜ້າເຂດພິເສດ ຕາມການ ມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ;
3. ລາຍງານຜົນຂອງການຄົ້ນຄ້ວາ, ພິຈາລະນາດັ່ງກ່າວເທິງນີ້ ໃຫ້ຄະນະປະຈຳສະ ພາແຫ່ງຊາດ ແລະກອງປະຊຸມສະພາແຫ່ງຊາດ.

## ມາດຕາ 31. ການຕິດຕາມກວດການິຕິກຳຕ່າງໆ

ກຳມາທິການຂອງສະພາແຫ່ງຊາດ ຕິດຕາມກວດການິຕິກຳຕ່າງໆ ໂດຍຜ່ານການ ເຄື່ອນໄຫວຂອງຕົນດັ່ງນີ້:

1. ຊຸກຍູ້ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ປະທານສານຂັ້ນອຸທອນ, ປະທານສານທະຫານຂັ້ນສູງ, ປະທານສານທະຫານພາກ, ໄອຍະການປະຊາຊົນ ຂັ້ນອຸທອນ, ໄອຍະການທະຫານຂັ້ນສູງ ແລະໄອຍະການທະຫານພາກ, ສູນກາງ ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ອອກນິຕິກຳຕ່າງໆ ເພື່ອຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມ ສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດໃຫ້ທັນເວລາ; ລວມທັງຕິດ ຕາມກວດການິຕິກຳດັ່ງກ່າວ;
2. ຄົ້ນຄວ້າ, ພິຈາລະນາ, ປະກອບຄຳເຫັນຕໍ່ນິຕິກຳຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງ ຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ;
3. ໃນກໍລະນີທີ່ເຫັນວ່ານິຕິກຳຕ່າງໆຂອງພາກສ່ວນທີ່ກ່ຽວຂ້ອງທີ່ປະກາດໃຊ້ໄປແລ້ວນັ້ນ ຫາກຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມ ສະພາແຫ່ງຊາດ, ຂອງຄະນະປະຈຳສະພາແຫ່ງຊາດ ກຳມາທິການຂອງສະພາແຫ່ງຊາດ ມີສິດສະເໜີໃຫ້ການຈັດຕັ້ງ, ບຸກຄົນທີ່ມີສິດ, ໜ້າທີ່ພິຈາລະນາປ່ຽນແປງ, ໂຈະການປະຕິບັດ ຫລືຍົກເລີກບາງສ່ວນ ຫລືທັງໝົດນິຕິກຳນັ້ນ. ພາຍໃນ ກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ ການຈັດຕັ້ງ ຫລືບຸກ ຄົນທີ່ກ່ຽວຂ້ອງ ຕ້ອງແຈ້ງໃຫ້ກຳມາທິການ

ຂອງສະພາແຫ່ງຊາດຊາບ ກ່ຽວກັບການແກ້ໄຂ; ຖ້າບໍ່ມີການແກ້ໄຂ ຫລືການແກ້ໄຂຫາກບໍ່ເໝາະສົມແລ້ວ ກຳມາທິການກໍຈະສະເໜີຕໍ່ຄະນະ ປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ, ແກ້ໄຂຕາມມາດຕາ 22 ຂອງກົດໝາຍສະບັບນີ້.

### ມາດຕາ 32. ການແຕ່ງຕັ້ງໜ່ວຍງານສະເພາະກິດ

ເມື່ອມີຄວາມຈຳເປັນ ກຳມາທິການຂອງສະພາແຫ່ງຊາດແຕ່ງຕັ້ງໜ່ວຍງານສະເພາະກິດຂຶ້ນ ຕາມຄຳເຫັນຂອງຕົນ ໂດຍໄດ້ຮັບການເຫັນດີ ຫລືການມອບໝາຍ ຂອງຄະນະປະຈຳ ສະພາແຫ່ງຊາດ ເພື່ອຕິດຕາມກວດກາລະອຽດບັນຫາໃດໜຶ່ງ.

ໃນມະຕິຕົກລົງແຕ່ງຕັ້ງຂອງກຳມາທິການຂອງສະພາແຫ່ງຊາດນັ້ນ ຕ້ອງກຳນົດເນື້ອໃນ, ສິດ, ໜ້າທີ່ ລວມທັງໂຄງປະກອບບຸກຄະລາກອນ ຂອງໜ່ວຍງານສະເພາະກິດດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ແລະເປົ້າໝາຍຂອງການຕິດ ຕາມກວດກາ ແລ້ວແຈ້ງໃຫ້ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ແລະອົງການທີ່ ກ່ຽວຂ້ອງ ຊາບລ່ວງໜ້າ ເຈັດວັນ ກ່ອນຈະດຳເນີນການຕິດຕາມກວດກາ.

ໃນເວລາຕິດຕາມກວດການັ້ນ ໜ່ວຍງານສະເພາະກິດມີສິດ ແລະໜ້າທີ່ດັ່ງນີ້:

- ສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາລາຍງານ, ສະໜອງຂໍ້ມູນ, ເອກະສານຕ່າງໆທີ່ກ່ຽວຂ້ອງກັບເນື້ອໃນຕິດຕາມກວດກາ, ຊີ້ແຈງ, ອະທິບາຍບັນຫາທີ່ໜ່ວຍງານສະເພາະກິດ ມີຄວາມສົນໃຈ;
- ພິຈາລະນາ, ຕີລາຄາບົດລາຍງານ, ຂໍ້ມູນ, ເອກະສານຕ່າງໆ ຂອງຜູ້ຖືກຕິດຕາມ ກວດກາ;
- ເມື່ອພົບເຫັນການຈັດຕັ້ງ ຫລືບຸກຄົນມີການລະເມີດລະບຽບກົດໝາຍ ມີສິດໃຫ້ ຄຳແນະນຳແກ່ຜູ້ຖືກຕິດຕາມກວດກາ ກ່ຽວກັບການແກ້ໄຂ ແລ້ວລາຍງານໃຫ້ກຳ ມາທິການຂອງສະພາແຫ່ງຊາດຊາບ ເພື່ອພິຈາລະນາ;
- ປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນ, ສິດ, ໜ້າທີ່ຂອງການຕິດຕາມກວດກາທີ່ໄດ້ ກຳນົດໄວ້ໃນມະຕິຕົກລົງແຕ່ງຕັ້ງໜ່ວຍງານສະເພາະກິດ;
- ສົ່ງບົດລາຍງານ ກ່ຽວກັບຜົນຂອງການຕິດຕາມກວດກາ ໃຫ້ກຳມາທິການຂອງສະພາແຫ່ງຊາດພາຍໃນກຳນົດ ສິບວັນ ນັບແຕ່ວັນສິ້ນສຸດ ການຕິດຕາມກວດກາ ເປັນຕົ້ນໄປ.

### ມາດຕາ 33. ການພິຈາລະນາ ແລະແກ້ໄຂຜົນຂອງການຕິດຕາມກວດກາ

ກຳມາທິການຂອງສະພາແຫ່ງຊາດ ເປີດກອງປະຊຸມຂອງຕົນຂຶ້ນ ເພື່ອຄົ້ນຄວ້າພິຈາ ລະນາບົດລາຍງານຂອງໜ່ວຍງານສະເພາະກິດ ຕາມຂັ້ນຕອນດັ່ງນີ້:

- ຫົວໜ້າໜ່ວຍງານ ສະເໜີບົດລາຍງານ;

- ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
- ກອງປະຊຸມຄົ້ນຄວ້າ, ປະກອບຄຳເຫັນ;
- ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ມີສິດຊີ້ແຈງ, ອະທິບາຍເພີ່ມເຕີມ;
- ປະທານກອງປະຊຸມສະຫລຸບ, ສະມາຊິກສະພາແຫ່ງຊາດ ຢູ່ໃນກຳມາທິການທີ່ ເຂົ້າຮ່ວມກອງປະຊຸມລົງມະຕິ ຖ້າເຫັນວ່າຈຳເປັນ.

ຜ່ານການຕິດຕາມກວດກາທົ່ວໄປ ຖ້າເຫັນວ່າມີການຈັດຕັ້ງ ຫລືບຸກຄົນ ຫາກໄດ້ລະ ເມີດລະບຽບກົດໝາຍແລ້ວ ກຳມາທິການຈະພິຈາລະນາແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 30 ແລະມາດຕາ 31 ຂອງກົດໝາຍສະບັບນີ້ ຫລືລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອມີມາດຕະການ ແລະວິທີການແກ້ໄຂ ຖ້າວ່າບັນຫາດັ່ງກ່າວ ຫາກຢູ່ເໜືອຂອບເຂດ ສິດ, ໜ້າທີ່ຂອງຕົນ.

ໃນກໍລະນີຜູ້ທີ່ຢູ່ໃນຕຳແໜ່ງ ຊຶ່ງກອງປະຊຸມສະພາແຫ່ງຊາດເປັນຜູ້ແຕ່ງຕັ້ງ ຫລືຮັບຮອງເອົາມີການລະເມີດລະບຽບກົດໝາຍຢ່າງຮ້າຍແຮງ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງຊາດ, ສິດ ແລະຜົນປະໂຫຍດອັນຊອບທຳຂອງການຈັດຕັ້ງ ຫລືບຸກຄົນນັ້ນ ກຳມາທິການຂອງສະພາແຫ່ງຊາດ ມີສິດສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາ ນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ລົງມະຕິປົດຕຳແໜ່ງ ຫລືບໍ່ໄວ້ວາງໃຈ.

## ໝວດທີ IV ການຕິດຕາມກວດກາ ຂອງຄະນະສະມາຊິກສະພາແຫ່ງຊາດ ຢູ່ເຂດເລືອກຕັ້ງ

### ມາດຕາ 34. ເນື້ອໃນການຕິດຕາມກວດກາ

ການຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດ ມີເນື້ອໃນຕົ້ນຕໍດັ່ງນີ້:

1. ບົດລາຍງານຂອງອົງການປົກຄອງຂັ້ນແຂວງ, ປະທານສານປະຊາຊົນຂັ້ນແຂວງ, ປະທານສານປະຊາຊົນຂັ້ນເມືອງ, ໄອຍະການປະຊາຊົນຂັ້ນແຂວງ, ໄອຍະການ ປະຊາຊົນຂັ້ນເມືອງ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ແຜນພັດທະ ນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດໃນປີຜ່ານມາ ແລະແຜນ ການວຽກງານໃນປີຕໍ່ໄປ ກໍຄືການປະຕິບັດມະຕິຄຳສັ່ງຂອງຂັ້ນເທິງຢູ່ໃນທ້ອງຖິ່ນ ຂອງຕົນ;
2. ການໃຫ້ຄວາມກະຈ່າງແຈ້ງຂອງອົງການປົກຄອງແຂວງ, ຫົວໜ້າພະແນກການຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ນາຍບ້ານ, ປະທານສານປະຊາຊົນຂັ້ນແຂວງ, ປະທານສານປະຊາຊົນຂັ້ນເມືອງ, ໄອຍະການປະຊາ

ຊົນຂັ້ນແຂວງ ຫລືໄອຍະການປະຊາຊົນຂັ້ນເມືອງ ກ່ຽວກັບບັນຫາໃດໜຶ່ງ ທີ່ຄະນະສະ ມາຊິກສະພາແຫ່ງຊາດ ມີຄວາມສົນໃຈ;

3. ນິຕິກຳຂອງຫົວໜ້າພະແນກການຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ນາຍບ້ານ ລວມທັງນິຕິກຳຂອງປະທານສານປະຊາຊົນຂັ້ນແຂວງ, ປະທານສານ ປະຊາຊົນຂັ້ນເມືອງ, ໄອຍະການປະຊາຊົນຂັ້ນແຂວງ, ໄອຍະການປະຊາຊົນຂັ້ນ ເມືອງ ຊຶ່ງບໍ່ກ່ຽວກັບການດຳເນີນຄະດີ;
4. ການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນຢູ່ເຂດເລືອກຕັ້ງຂອງຕົນ;
5. ເມື່ອຈຳເປັນກໍຈັດຕັ້ງໜ່ວຍງານສະເພາະກິດ ຫລືມອບໝາຍໃຫ້ສະມາຊິກສະພາ ແຫ່ງຊາດ ລົງເກັບກຳຂໍ້ມູນ ກ່ຽວກັບບັນຫາໃດໜຶ່ງຢູ່ທ້ອງຖິ່ນຂອງຕົນ.

## ມາດຕາ 35. ການສ້າງແຜນການຕິດຕາມກວດກາ

ຄະນະສະມາຊິກສະພາແຫ່ງຊາດ ສ້າງແຜນການຕິດຕາມກວດກາຂອງຕົນ ປະຈຳ ທຸກເດືອນ ແລະໜຶ່ງປີຂຶ້ນ ໂດຍອີງຕາມແຜນການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ ແລະສະພາບການຕົວຈິງຂອງທ້ອງຖິ່ນ, ຕາມການສະເໜີຂອງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາ ຊົນ, ອົງການຈັດຕັ້ງສັງຄົມຂັ້ນທ້ອງຖິ່ນ ແລະຕາມການສະເໜີຂອງຜູ້ທີ່ມີສິດເລືອກຕັ້ງ. ພ້ອມ ກັນນັ້ນກໍລາຍງານແຜນການຂອງຕົນ ໃຫ້ຄະນະປະຈຳສະພາແຫ່ງຊາດ ແລະແຈ້ງໃຫ້ອົງການ ປົກຄອງແຂວງຊາບ.

## ມາດຕາ 36. ການພິຈາລະນາບົດລາຍງານຂອງພາກສ່ວນຕ່າງໆ

ຄະນະສະມາຊິກສະພາແຫ່ງຊາດ ສະເໜີໃຫ້ອົງການປົກຄອງຂັ້ນແຂວງ, ປະທານ ສານປະຊາຊົນຂັ້ນແຂວງ, ປະທານສານປະຊາຊົນຂັ້ນເມືອງ, ໄອຍະການປະຊາຊົນຂັ້ນແຂວງ, ໄອຍະການປະຊາຊົນຂັ້ນເມືອງ ສົ່ງບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ ມາໃຫ້ຕົນ ເພື່ອຄົ້ນຄວ້າ, ພິຈາລະນາ.

ຄະນະສະມາຊິກສະພາແຫ່ງຊາດ ເປີດກອງປະຊຸມ ເພື່ອຮັບຟັງ, ຄົ້ນຄວ້າ ແລະປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ. ຖ້າເຫັນວ່າຍັງມີບັນຫາໃດບັນຫາໜຶ່ງ ຫາກບໍ່ທັນຈະແຈ້ງ ກໍມີສິດເຊີນການຈັດຕັ້ງ ແລະບຸກຄົນທີ່ກ່ຽວຂ້ອງມາຊີ້ແຈງ, ອະທິບາຍຕໍ່ຄະນະສະມາຊິກສະ ພາແຫ່ງຊາດ.

ຖ້າເຫັນວ່າການຈັດຕັ້ງ ຫລືບຸກຄົນມີການລະເມີດລະບຽບກົດໝາຍແລ້ວ ຄະນະສະມາຊິກສະພາແຫ່ງຊາດມີສິດສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ມີສິດ, ໜ້າທີ່ ທີ່ກ່ຽວຂ້ອງ ແກ້ໄຂ ແລະແຈ້ງໃຫ້ຄະນະສະມາຊິກສະພາແຫ່ງຊາດຊາບ ພາຍໃນກຳນົດສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫລືມີ

ການແກ້ໄຂທີ່ບໍ່ເໝາະສົມນັ້ນ ຄະນະສະມາຊິກສະພາແຫ່ງຊາດ ມີສິດສະເໜີໃຫ້ອົງການຈັດຕັ້ງຂັ້ນເທິງຖັດນັ້ນ ພິຈາລະ ນາ ກ່ຽວກັບການແກ້ໄຂ, ພ້ອມທັງລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດຊາບ.

## ມາດຕາ 37. ການຕິດຕາມກວດການິຕິກຳຕ່າງໆ

ຄະນະສະມາຊິກສະພາແຫ່ງຊາດ ຕິດຕາມກວດການິຕິກຳຕ່າງໆ ຂອງພາກສ່ວນທີ່ກ່ຽວຂ້ອງດັ່ງນີ້:

1. ຊຸກຍູ້ອົງການປົກຄອງຂັ້ນແຂວງ, ຫົວໜ້າພະແນກການຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ນາຍບ້ານ, ປະທານສານປະຊາຊົນຂັ້ນແຂວງ, ປະທານສານປະຊາຊົນຂັ້ນເມືອງ, ໄອຍະການປະຊາຊົນຂັ້ນແຂວງ, ໄອຍະການປະຊາຊົນຂັ້ນ ເມືອງ ກ່ຽວກັບການອອກນິຕິກຳຕ່າງໆ ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິ, ຄຳສັ່ງຂອງຂັ້ນເທິງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດໃນທ້ອງຖິ່ນຂອງຕົນ, ລວມທັງຕິດຕາມກວດກາຄວາມ ຖືກຕ້ອງຂອງນິຕິກຳດັ່ງກ່າວ;
2. ໃນກໍລະນີທີ່ເຫັນວ່ານິຕິກຳໃດໜຶ່ງ ຫາກຂັດກັບລັດຖະທຳມະນູນ, ກົດໝາຍ, ມະຕິ, ຄຳສັ່ງຂອງຂັ້ນເທິງ ຄະນະສະມາຊິກສະພາແຫ່ງຊາດ ມີສິດສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ກ່ຽວຂ້ອງໂຈະການຈັດຕັ້ງປະຕິບັດ ແລະປັບປຸງນິຕິກຳນັ້ນ ແລະລາຍງານໃຫ້ຄະນະສະມາຊິກສະພາແຫ່ງຊາດ ພາຍໃນກຳນົດ ສາມສິບ ວັນ ນັບແຕ່ວັນໄດ້ຮັບຄຳສະເໜີໃຫ້ແກ້ໄຂ ເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫລືການແກ້ໄຂບໍ່ເໝາະສົມແລ້ວ ຄະນະສະມາຊິກສະພາແຫ່ງຊາດ ມີສິດສະເໜີ ໃຫ້ອົງການຈັດຕັ້ງຂັ້ນເທິງຖັດນັ້ນ ໃນທ້ອງຖິ່ນຂອງຕົນ ພິຈາລະນາກ່ຽວກັບການ ແກ້ໄຂ, ພ້ອມທັງລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ຊາບ.

## ມາດຕາ 38. ການຕິດຕາມກວດກາການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ

ຄະນະສະມາຊິກສະພາແຫ່ງຊາດ ມີສິດ, ໜ້າທີ່ຕິດຕາມກວດກາ ການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ ໃນເຂດເລືອກຕັ້ງຂອງຕົນດັ່ງນີ້:

- ຕ້ອນຮັບປະຊາຊົນ ແລະຮັບເອົາຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ;
- ຄົ້ນຄວ້າ, ເກັບກຳຂໍ້ມູນ ແລະປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອມີວິທີການ ແລະມາດຕະການແກ້ໄຂ;
- ສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ມີສິດ, ໜ້າທີ່ກ່ຽວຂ້ອງ ດຳເນີນການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນຕາມລະບຽບກົດໝາຍ ແລະ ແຈ້ງ ຢ່າງເປັນລາຍລັກອັກສອນ ໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດ ເລືອກຕັ້ງຊາບ ກ່ຽວກັບການແກ້ໄຂບັນຫາດັ່ງກ່າວ ພາຍໃນ

ກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. ຖ້າຫາກບໍ່ມີການແກ້ໄຂ ຫລືມີການແກ້ ໄຂທີ່ບໍ່ເໝາະສົມແລ້ວ ຄະນະສະມາຊິກສະພາແຫ່ງຊາດມີສິດສະເໜີໃຫ້ການ ຈັດຕັ້ງ ຫລືບຸກຄົນມີສິດ, ໜ້າທີ່ຂັ້ນເທິງຖັດນັ້ນໃນທ້ອງຖິ່ນຂອງຕົນ ພິຈາລະນາແກ້ໄຂ ພ້ອມທັງລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດຊາບ;

ໃນກໍລະນີການແກ້ໄຂບັນຫາ ຫາກເກີນພາລະບົດບາດ, ສິດ, ໜ້າທີ່ຂອງຕົນນັ້ນ ໃຫ້ລາຍງານຄະນະປະຈຳສະພາແຫ່ງຊາດ ເພື່ອມີວິທີການ ແລະ ມາດຕະການ ແກ້ໄຂ.

## ມາດຕາ 39. ການແຕ່ງຕັ້ງໜ່ວຍງານສະເພາະກິດ

ເມື່ອມີຄວາມຈຳເປັນ ຄະນະສະມາຊິກສະພາແຫ່ງຊາດ ແຕ່ງຕັ້ງໜ່ວຍງານສະເພາະ ກິດຂຶ້ນຕາມຄວາມເຫັນຂອງຕົນ ຫລືຕາມການມອບໝາຍ ຂອງຄະນະປະຈຳສະພາແຫ່ງຊາດ ເພື່ອຕິດຕາມກວດກາລະອຽດບັນຫາໃດໜຶ່ງ.

ໃນມະຕິຕົກລົງແຕ່ງຕັ້ງຂອງຄະນະສະມາຊິກສະພາແຫ່ງຊາດນັ້ນ ຕ້ອງກຳນົດເນື້ອໃນ, ສິດ, ໜ້າທີ່ ລວມທັງໂຄງປະກອບບຸກຄະລາກອນ ຂອງໜ່ວຍງານສະເພາະກິດດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ແລະເປົ້າໝາຍຂອງການຕິດຕາມກວດ ກາ ແລ້ວແຈ້ງໃຫ້ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ແລະອົງການທີ່ກ່ຽວຂ້ອງຊາບ ລ່ວງໜ້າ ເຈັດວັນ ກ່ອນວັນດຳເນີນການຕິດຕາມກວດກາ.

ໃນເວລາຕິດຕາມກວດການັ້ນ ໜ່ວຍງານສະເພາະກິດມີສິດ ແລະໜ້າທີ່ດັ່ງນີ້:

- ສະເໜີໃຫ້ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາລາຍງານ, ສະໜອງຂໍ້ມູນ, ເອກະສານຕ່າງໆທີ່ກ່ຽວຂ້ອງກັບເນື້ອໃນຕິດຕາມກວດກາ, ຊີ້ແຈງ, ອະທິບາຍບັນຫາທີ່ໜ່ວຍງານສະເພາະກິດມີຄວາມສົນໃຈ;
- ພິຈາລະນາ, ຕີລາຄາບົດລາຍງານ, ຂໍ້ມູນ, ເອກະສານຕ່າງໆ ຂອງຜູ້ຖືກຕິດຕາມ ກວດກາ;
- ເມື່ອພົບເຫັນການຈັດຕັ້ງ ຫລືບຸກຄົນທີ່ມີການລະເມີດລະບຽບກົດໝາຍ ມີສິດໃຫ້ ຄຳແນະນຳແກ່ຜູ້ຖືກຕິດຕາມກວດກາກ່ຽວກັບການແກ້ໄຂ ແລະລາຍງານໃຫ້ຄະ ນະສະມາຊິກສະພາແຫ່ງຊາດຊາບ ເພື່ອພິຈາລະນາ;
- ປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນ, ສິດ, ໜ້າທີ່ຂອງການຕິດຕາມກວດກາທີ່ໄດ້ ກຳນົດໄວ້ໃນມະຕິຕົກລົງແຕ່ງຕັ້ງໜ່ວຍງານສະເພາະກິດ;
- ໜ່ວຍງານສະເພາະກິດ ຕ້ອງສົ່ງບົດລາຍງານກ່ຽວກັບຜົນ ຂອງການຕິດຕາມກວດກາ ໃຫ້ຄະນະສະມາຊິກສະພາແຫ່ງຊາດ ພາຍໃນກຳນົດ ສິບວັນນັບແຕ່ວັນສິ້ນ ສຸດການຕິດຕາມກວດກາເປັນຕົ້ນໄປ.

## ມາດຕາ 40. ການພິຈາລະນາ ແລະແກ້ໄຂຜົນຂອງການຕິດຕາມກວດກາ

ຄະນະສະມາຊິກສະພາແຫ່ງຊາດ ເປີດກອງປະຊຸມຂອງຕົນຂຶ້ນ ເພື່ອຄົ້ນຄວ້າ, ພິຈາ ລະນາ ແລະຕົກລົງບົດລາຍງານຂອງໜ່ວຍງານສະເພາະກິດຕາມຂັ້ນຕອນດັ່ງນີ້:

- ຫົວໜ້າໜ່ວຍງານ ສະເໜີບົດລາຍງານ;
- ການຈັດຕັ້ງ ຫລືບຸກຄົນ ທີ່ຖືກຕິດຕາມກວດກາ ຊີ້ແຈງ, ອະທິບາຍ;
- ກອງປະຊຸມຄົ້ນຄວ້າປະກອບຄຳເຫັນ;
- ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ມີສິດຊີ້ແຈງ, ອະທິບາຍເພີ່ມເຕີມ;
- ປະທານກອງປະຊຸມສະຫລຸບ, ສະມາຊິກຂອງຄະນະສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມລົງມະຕິ ຖ້າເຫັນວ່າຈຳເປັນ.

ຜ່ານການຕິດຕາມກວດກາທົ່ວໄປ ຖ້າເຫັນວ່າການຈັດຕັ້ງ ຫລືບຸກຄົນມີການລະເມີດລະບຽບກົດໝາຍ ຄະນະສະມາຊິກສະພາແຫ່ງຊາດ ພິຈາລະນາແກ້ໄຂຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 36, 37 ແລະມາດຕາ 38 ຂອງກົດໝາຍສະບັບນີ້ ຫລືລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອມີມາດຕະການ ແລະວິທີການແກ້ໄຂ ຖ້າວ່າບັນຫາດັ່ງກ່າວຫາກຢູ່ ເໜືອຂອບເຂດສິດ, ໜ້າທີ່ຂອງຕົນ.

## ໝວດທີ V ການຕິດຕາມກວດກາຂອງສະມາຊິກສະພາແຫ່ງຊາດ

### ມາດຕາ 41. ເນື້ອໃນການຕິດຕາມກວດກາ

ສະມາຊິກສະພາແຫ່ງຊາດ ຕິດຕາມກວດກາຕາມເນື້ອໃນດັ່ງນີ້:

- ບົດລາຍງານຂອງພາກສ່ວນຕ່າງໆ ໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມ ກຳມາທິການຂອງສະພາແຫ່ງຊາດ ແລະໃນກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງຂອງຕົນ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຕົກລົງຂອງກອງປະຊຸມສະພາແຫ່ງຊາດ, ແຜນພັດທະ ນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ມະຕິ ແລະຄຳສັ່ງຂອງຂັ້ນ ເທິງ;
- ຕັ້ງຄຳຖາມຕໍ່ປະທານປະເທດ, ປະທານສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ ຊັກຖາມນາຍົກລັດຖະມົນຕີ ແລະສະມາຊິກລັດຖະບານ ຜູ້ອື່ນໆ, ປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ໃນກອງປະຊຸມສະ ພາແຫ່ງຊາດ;
- ນິຕິກຳຂອງພາກສ່ວນຕ່າງໆ;
- ການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ.

### ມາດຕາ 42. ການສ້າງ ແລະປະຕິບັດແຜນການຕິດຕາມກວດກາ

ສະມາຊິກສະພາແຫ່ງຊາດ ສ້າງແຜນການ, ຕາຕະລາງເຄື່ອນໄຫວວຽກງານ, ຕິດຕາມກວດກາຂອງຕົນ ໂດຍອີງຕາມແຜນການຂອງຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ, ກໍາມາທິການຂອງສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ ແລະ ຂອງກອງປະຊຸມສະພາແຫ່ງຊາດ, ພ້ອມກັນນັ້ນ ກໍສົ່ງໃຫ້ຄະນະສະມາຊິກສະພາແຫ່ງຊາດ ປະຈໍາ ເຂດເລືອກຕັ້ງຂອງຕົນຊາບ.

ນອກຈາກດໍາເນີນການຕິດຕາມກວດກາດ້ວຍຕົນເອງແລ້ວ ສະມາຊິກສະພາແຫ່ງຊາດ ກໍມີສິດ, ໜ້າທີ່ເຂົ້າຮ່ວມການເຄື່ອນໄຫວຕິດຕາມກວດກາຂອງຄະນະສະມາຊິກສະພາແຫ່ງຊາດ, ກໍາມາທິການຂອງສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ ແລະ ຂອງກອງປະ ຊຸມສະພາແຫ່ງຊາດ.

ສໍາລັບສະມາຊິກສະພາແຫ່ງຊາດ ຜູ້ທີ່ຄວບຕໍາແໜ່ງນັ້ນ ກໍໃຫ້ແບ່ງເວລາເຄື່ອນໄຫວ ວຽກງານ, ຕິດຕາມກວດກາຂອງສະພາແຫ່ງຊາດ ຢ່າງໜ້ອຍ ໜຶ່ງສ່ວນສາມຂອງເວລາເຮັດ ວຽກທັງໝົດ.

### ມາດຕາ 43. ການເຄື່ອນໄຫວຕິດຕາມກວດກາ

ສະມາຊິກສະພາແຫ່ງຊາດ ເຄື່ອນໄຫວຕິດຕາມກວດກາດັ່ງນີ້:

- ເຂົ້າຮ່ວມການຄົ້ນຄວ້າ, ປະກອບຄໍາເຫັນ, ພິຈາລະນາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນ ງົບປະມານແຫ່ງລັດ, ມະຕິ ແລະຄໍາສັ່ງຂອງຂັ້ນເທິງ ໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄົບຄະນະຂອງກໍາມາທິການ ແລະກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງຂອງຕົນ;
- ເຂົ້າຮ່ວມໃນຄະນະຕິດຕາມກວດກາສະເພາະກິດ ຊຶ່ງແຕ່ງຕັ້ງໂດຍກອງປະຊຸມສະພາແຫ່ງຊາດ, ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການ ຂອງສະພາແຫ່ງ ຊາດ ຫລືຄະນະສະມາຊິກສະພາແຫ່ງຊາດ ຕາມການມອບໝາຍ;
- ເຄື່ອນໄຫວຕິດຕາມກວດກາຕາມແຜນການຕິດຕາມກວດກາຂອງຕົນທີ່ກໍານົດ ໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້.

### ມາດຕາ 44. ການຊັກຖາມຢູ່ໃນກອງປະຊຸມສະພາແຫ່ງຊາດ

ພາຍຫລັງທີ່ໄດ້ຮັບຟັງການລາຍງານຂອງປະທານປະເທດ, ປະທານສະພາແຫ່ງຊາດ, ນາຍົກລັດຖະມົນຕີ, ສະມາຊິກລັດຖະບານຜູ້ອື່ນໆ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດໃນກອງປະຊຸມສະພາແຫ່ງຊາດແລ້ວ ສະມາຊິກສະພາແຫ່ງຊາດ ມີສິດຕັ້ງຄໍາຖາມ ຫລືຄໍາຊັກຖາມຕໍ່ພາກສ່ວນດັ່ງກ່າວ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນ ແລະກົດໝາຍວ່າດ້ວຍສະພາແຫ່ງຊາດ.

ເນື້ອໃນຄຳຖາມ ແລະຄຳຊັກຖາມຕ້ອງກະທັດລັດ, ຈະແຈ້ງ, ມີບ່ອນອີງ ແລະ ຕ້ອງຕິດພັນກັບສິດ, ໜ້າທີ່, ຄວາມຮັບຜິດຊອບຂອງຜູ້ທີ່ຖືກຖາມ ຫລືຖືກຊັກຖາມ. ຄຳຖາມ ຫລືຄຳຊັກຖາມອາດຈະເປັນລາຍລັກອັກສອນ ຫລືດ້ວຍວາຈາ.

ບຸກຄົນທີ່ຖືກຖາມ ຫລືຖືກຊັກຖາມນັ້ນຕ້ອງຕອບ, ຊີ້ແຈງຄຳຖາມ ຫລືຄຳຊັກຖາມ ຂອງສະມາຊິກສະພາແຫ່ງຊາດ ຢູ່ໃນກອງປະຊຸມສະພາແຫ່ງຊາດດ້ວຍວາຈາ ຫລືເປັນ ລາຍລັກອັກສອນ.

### ມາດຕາ 45. ການຕິດຕາມກວດການິຕິກຳຕ່າງໆ

ສະມາຊິກສະພາແຫ່ງຊາດ ເຂົ້າຮ່ວມຄົ້ນຄວ້າ, ປະກອບຄຳເຫັນ ແລະພິຈາລະນາ ນິຕິກຳຕ່າງໆ ໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄົບຄະນະຂອງກຳມາທິການ ສະພາແຫ່ງຊາດ ແລະກອງປະຊຸມຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກ ຕັ້ງ.

### ມາດຕາ 46. ການຕິດຕາມກວດກາການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ

ສະມາຊິກສະພາແຫ່ງຊາດ ມີສິດ ແລະໜ້າທີ່ຮັບຕ້ອນ ແລະໃຫ້ຄຳປຶກສາຫາລື ແກ່ ປະຊາຊົນ, ຮັບຄຳສະເໜີ ແລະຄຳຮ້ອງທຸກຂອງປະຊາຊົນ ເພື່ອສະເໜີໃຫ້ຄະນະສະ ມາຊິກສະພາແຫ່ງຊາດ ພິຈາລະນາ, ແກ້ໄຂຕາມລະບຽບການວ່າດ້ວຍການແກ້ໄຂຄຳສະ ເໜີ ແລະ ຄຳຮ້ອງທຸກຂອງປະຊາຊົນ ແລະຕິດຕາມກວດກາການແກ້ໄຂຄຳສະເໜີ ແລະຄຳຮ້ອງທຸກ ຂອງປະຊາຊົນ ຕາມການຕົກລົງຂອງຄະນະສະມາຊິກສະພາແຫ່ງຊາດ.

### ມາດຕາ 47. ການລາຍງານຜົນຂອງການຕິດຕາມກວດກາ

ພາຍຫລັງທີ່ໄດ້ເຄື່ອນໄຫວຕິດຕາມກວດກາແລ້ວ ສະມາຊິກສະພາແຫ່ງຊາດ ຕ້ອງ ລາຍງານຜົນຂອງການຕິດຕາມກວດການັ້ນ ໃຫ້ຄະນະສະມາຊິກສະພາແຫ່ງຊາດ, ກຳມາທິ ການຂອງສະພາແຫ່ງຊາດທີ່ຕົນສັງກັດ ຫລືໃນກໍລະນີຈຳເປັນ ກໍລາຍງານໃຫ້ ຄະນະປະຈຳສະ ພາແຫ່ງຊາດ ເພື່ອພິຈາລະນາ, ແກ້ໄຂ.

### ມາດຕາ 48. ການກວດກາຂອງປະຊາຊົນ

ສະມາຊິກສະພາແຫ່ງຊາດ ຕ້ອງຢູ່ໃຕ້ການກວດກາຂອງປະຊາຊົນ ດ້ວຍການ ລາຍ ງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ປະຊາຊົນໃນເຂດເລືອກຕັ້ງ ຢ່າງໜ້ອຍປີ ລະ ສອງ ເທື່ອ.

## ໝວດທີ VI
## ການອຳນວຍຄວາມສະດວກໃຫ້ແກ່ວຽກງານຕິດຕາມກວດກາຂອງສະພາແຫ່ງຊາດ

### ມາດຕາ 49. ຫ້ອງວ່າການສະພາແຫ່ງຊາດ ແລະຫ້ອງການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

ຫ້ອງວ່າການສະພາແຫ່ງຊາດ, ຫ້ອງການສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີໜ້າທີ່ອຳນວຍຄວາມສະດວກທາງດ້ານງົບປະມານ, ພາຫະນະ, ອຸປະກອນ ແລະຂໍ້ມູນຂ່າວສານຕ່າງໆທີ່ຈຳເປັນໃຫ້ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາແຫ່ງ ຊາດ ໃນການເຄື່ອນໄຫວປະຕິບັດວຽກງານຕິດຕາມກວດກາ.

### ມາດຕາ 50. ອົງການຈັດຕັ້ງ ແລະພົນລະເມືອງ

ອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະພົນລະເມືອງທຸກຄົນ ມີພັນທະປະກອບສ່ວນ, ອຳນວຍຄວາມສະດວກໃຫ້ ແກ່ວຽກງານຕິດຕາມກວດກາຂອງສະພາແຫ່ງຊາດເຊັ່ນ: ສະໜອງຂໍ້ມູນຂ່າວສານ, ໃຫ້ການ ຊ່ວຍເຫຼືອດ້ານຕ່າງໆ.

## ພາກທີ III ພັນທະ, ຄວາມຮັບຜິດຊອບ ແລະສິດ ຂອງການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ

### ມາດຕາ 51. ພັນທະ ແລະຄວາມຮັບຜິດຊອບ

ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ ມີພັນທະ ແລະຄວາມຮັບຜິດຊອບ ດັ່ງນີ້ :

1. ໃຫ້ຄວາມຮ່ວມມື ແລະອຳນວຍຄວາມສະດວກແກ່ການຕິດຕາມກວດກາ ດ້ວຍການສະໜອງຂໍ້ມູນຂ່າວສານ, ເອກະສານຕ່າງໆໃຫ້ທັນເວລາ, ໃຫ້ຄຳຊີ້ແຈງ, ອະທິບາຍ ຕາມການສະເໜີຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາແຫ່ງຊາດ;
2. ສົ່ງນິຕິກຳຂອງຕົນ ໃຫ້ສະພາແຫ່ງຊາດ ຕາມຂັ້ນທີ່ຕົນຖືກຕິດຕາມກວດກາ ທີ່ໄດ້ກຳ ນົດໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້ ພາຍໃນກຳນົດເວລາ ເຈັດວັນ, ນັບແຕ່ວັນລົງລາຍເຊັນ ປະກາດໃຊ້ເປັນຕົ້ນໄປ;
3. ຊີ້ແຈງ, ອະທິບາຍດ້ວຍຕົນເອງ ກ່ຽວກັບບັນຫາທີ່ກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະ ພາແຫ່ງຊາດ ແລະສະມາຊິກສະພາແຫ່ງຊາດມີຄວາມສົນໃຈ; ໃນກໍລະນີທີ່ຈະມອບສິດໃຫ້ຜູ້ອື່ນຂຶ້ນຊີ້ແຈງ, ອະທິບາຍແທນນັ້ນ ຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມ ສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການຂອງສະພາແຫ່ງຊາດ ຫລືຄະນະສະມາຊິກສະພາແຫ່ງຊາດ ເສຍກ່ອນ;

4. ປະຕິບັດຄຳແນະນຳ, ຄຳສະເໜີ ແລະມະຕິຕົກລົງກ່ຽວກັບວິທີການ ແລະມາດຕະການແກ້ໄຂຜົນຂອງການຕິດຕາມກວດກາຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ ຫລືຄະນະສະມາຊິກສະພາ ແຫ່ງຊາດ ຢ່າງເຂັ້ມງວດ ແລະທັນເວລາ.

ຖ້າບຸກຄົນ ຫລືຫົວໜ້າການຈັດຕັ້ງທີ່ຖືກຕິດຕາມກວດການັ້ນ ຫາກບໍ່ປະຕິບັດພັນທະ ແລະຄວາມຮັບຜິດຊອບທີ່ກ່າວມາເທິງນີ້ ຫລືຂັດຂວາງການຕິດຕາມກວດກາ ຂອງສະພາແຫ່ງ ຊາດ ຈະຖືວ່າເປັນການລະເມີດລະບຽບກົດໝາຍ ແລະຈະຖືກກ່າວເຕືອນ, ປະຕິບັດວິໄນ ຫລື ຖືກປະຕິບັດມາດຕະການອື່ນ ຕາມລະບຽບກົດໝາຍ.

### ມາດຕາ 52. ສິດຂອງການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ

ການຈັດຕັ້ງ ແລະບຸກຄົນທີ່ຖືກຕິດຕາມກວດກາ ມີສິດດັ່ງນີ້:

1. ໄດ້ຮັບການແຈ້ງການກ່ອນ ກ່ຽວກັບເນື້ອໃນ ແລະເວລາຂອງການຕິດຕາມກວດກາ, ຄຳຖາມ ຫລືຄຳຊັກຖາມທີ່ຈະຕ້ອງໄດ້ຕອບ;
2. ຊີ້ແຈງ, ອະທິບາຍ ກ່ຽວກັບບັນຫາທີ່ພົວພັນເຖິງສິດ, ໜ້າທີ່ ແລະຄວາມຮັບຜິດຊອບ ຂອງຕົນ;
3. ບໍ່ຕອບຄຳຖາມ ຫລືຄຳຊັກຖາມ, ບໍ່ສະໜອງຂໍ້ມູນ, ເອກະສານທີ່ບໍ່ກ່ຽວຂ້ອງກັບສິດ, ໜ້າທີ່ ແລະຄວາມຮັບຜິດຊອບຂອງຕົນ;
4. ໃນກໍລະນີທີ່ຜູ້ຖືກຕິດຕາມກວດກາ ຫາກບໍ່ເຫັນດີນຳການຕົກລົງໃນການຕິດຕາມກວດ ກາຂອງຄະນະສະມາຊິກສະພາແຫ່ງຊາດ ຫລືຂອງກຳມາທິການຂອງສະພາແຫ່ງຊາດ ນັ້ນ ການຈັດຕັ້ງ ຫລືບຸກຄົນທີ່ຖືກຕິດຕາມກວດກາ ມີສິດສະເໜີຕໍ່ຄະນະປະຈຳສະ ພາແຫ່ງຊາດ ພິຈາລະນາຄືນ ກ່ຽວກັບບັນຫາດັ່ງກ່າວ.

## ພາກທີ IV ບົດບັນຍັດສຸດທ້າຍ

### ມາດຕາ 53. ການຈັດຕັ້ງປະຕິບັດ

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 54. ຜົນສັກສິດ

ກົດໝາຍສະບັບນີ້ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ